ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 177 /ລບ

ນະຄອນຫຼວງວຽງຈັນ, ວັນທີ 5-6-2015

# ດຳລັດ
# ວ່າດ້ວຍການສຶກສາຊັ້ນສູງ

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບປັບປຸງ ເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍ ການສຶກສາ ສະບັບເລກທີ 04/ສພຊ, ລົງວັນທີ 03 ກໍລະກົດ 2007;
- ອີງຕາມໜັງສືສະເໜີ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 0402/ສສກ.ຊສ.015, ລົງວັນທີ 20 ເມສາ 2015.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ກ່ຽວກັບການຈັດຕັ້ງ ແລະຄຸ້ມຄອງການສຶກສາຊັ້ນສູງຂອງ ສປປ ລາວ ເພື່ອເຮັດໃຫ້ການຈັດຕັ້ງການຮຽນ-ການສອນ, ການຄົ້ນຄວ້າວິທະຍາສາດ ແລະການບໍລິການວິຊາການ ຂອງສະຖາບັນການສຶກສາຊັ້ນສູງທັງພາກລັດ ແລະພາກເອກະຊົນ ມີຄວາມເປັນເອກະພາບ, ຮັບປະກັນຄຸນນະພາບ ແລະ ມີປະສິດທິຜົນສູງ, ສາມາດຕອບສະໜອງຄວາມຕ້ອງການໃນການກໍ່ສ້າງນັກວິຊາການ, ນັກວິຊາສະເພາະ, ນັກຄົ້ນຄວ້າ, ນັກວິທະຍາສາດທີ່ມີຄວາມຮູ້-ຄວາມສາມາດ, ມີຄຸນສົມບັດສົມທຳປະຕິວັດ, ມີຄວາມພ້ອມປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ສາມາດເຊື່ອມໂຍງກັບພາກພື້ນ ແລະສາກົນ.

### ມາດຕາ 2 ການສຶກສາຊັ້ນສູງ

ການສຶກສາຊັ້ນສູງ ແມ່ນການສຶກສາຕໍ່ຈາກຊັ້ນມັດທະຍົມສຶກສາຕອນປາຍ ຫຼື ທຽບເທົ່າ, ຊຶ່ງມີການຈັດຕັ້ງການຮຽນ-ການສອນ ເລີ່ມແຕ່ລະດັບ ອະນຸປະລິນຍາ ຈົນເຖິງລະດັບ ປະລິນຍາເອກ ຕາມຫຼັກສູດປົກກະຕິ, ຫຼັກສູດຕໍ່ເນື່ອງ ຫຼື ເຊື່ອມຕໍ່ຕາມນະໂຍບາຍການສຶກສາຮຽນຮູ້ຕະຫຼອດຊີວິດ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ສະຖາບັນການສຶກສາຊັ້ນສູງ** ໝາຍເຖິງ ສະຖານການສຶກສາທີ່ມີການຈັດຕັ້ງການຮຽນ-ການສອນ ຫຼັກສູດຕາມສາຍວິຊາການ ເລີ່ມແຕ່ລະດັບອະນຸປະລິນຍາຂຶ້ນໄປ;
2. **ຫຼັກສູດການສຶກສາຊັ້ນສູງ** ໝາຍເຖິງ ຫຼັກສູດການຮຽນ-ການສອນສາຂາວິຊາຕ່າງໆ ເລີ່ມແຕ່ລະດັບອະນຸປະລິນຍາຂຶ້ນໄປ;
3. **ສະພາວິຊາການ** ໝາຍເຖິງ ອົງການຈັດຕັ້ງໜຶ່ງ ທີ່ເຮັດໜ້າທີ່ ເປັນທີ່ປຶກສາ ທາງດ້ານວິຊາການ ຢູ່ໃນກົງຈັກບໍລິຫານ-ຄຸ້ມຄອງສະຖາບັນການສຶກສາຊັ້ນສູງ;
4. **ສະພາບໍລິຫານ** ໝາຍເຖິງ ອົງການຈັດຕັ້ງໜຶ່ງ ທີ່ເຮັດໜ້າທີ່ ເປັນທີ່ປຶກສາ ທາງດ້ານການບໍລິຫານ ຢູ່ໃນກົງຈັກບໍລິຫານ-ຄຸ້ມຄອງສະຖາບັນການສຶກສາຊັ້ນສູງ;
5. **ຄູ** ໝາຍເຖິງ ຜູ້ທີ່ປະຕິບັດໜ້າທີ່ສິດສອນ, ຖ່າຍທອດຄວາມຮູ້, ສຶກສາອົບຮົມຜູ້ຮຽນ ຢູ່ໃນສະຖາບັນການສຶກສາຊັ້ນສູງ;
6. **ບຸກຄະລາກອນການສຶກສາຊັ້ນສູງ** ໝາຍເຖິງ ຜູ້ປະຕິບັດໜ້າທີ່ຄຸ້ມຄອງ, ບໍລິຫານ, ຕິດຕາມກວດກາ, ບໍລິການຮັບໃຊ້ ແລະອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວ ຢູ່ໃນສະຖາບັນການສຶກສາຊັ້ນສູງ;
7. **ນັກສຶກສາ** ໝາຍເຖິງ ຜູ້ຮຽນທີ່ກຳລັງສຶກສາຮ່ຳຮຽນ ຫຼື ຄົ້ນຄວ້າຢູ່ໃນສະຖາບັນການສຶກສາຊັ້ນສູງ;
8. **ສິດເປັນເຈົ້າຕົນເອງ (Autonomy)** ໝາຍເຖິງ ຄວາມເປັນອິດສະລະ, ຄວາມເປັນເຈົ້າຕົນເອງ ແລະການມີສິດຕ່າງໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 4 ນະໂຍບາຍຂອງລັດຕໍ່ ວຽກງານການສຶກສາຊັ້ນສູງ

ລັດ ສົ່ງເສີມໃຫ້ພົນລະເມືອງລາວທຸກຄົນ ໄດ້ເຂົ້າເຖິງການສຶກສາຊັ້ນສູງ ຕາມຄວາມຮູ້ຄວາມສາມາດ ແລະເງື່ອນໄຂຕົວຈິງຂອງຜູ້ຮຽນ, ຕາມນະໂຍບາຍການສຶກສາຕະຫຼອດຊີວິດ ໂດຍສົ່ງເສີມການເຂົ້າຮຽນໃນສາຍການສຶກສາຊັ້ນສູງ ດ້ວຍການອຸດໜູນການຮຽນໃຫ້ແກ່ຜູ້ຮຽນເກັ່ງ, ກຸ່ມເປົ້າໝາຍ ຜູ້ທຸກຍາກ, ແມ່ຍິງ, ຊົນເຜົ່າ ແລະຜູ້ດ້ອຍໂອກາດ.

ລັດ ຊຸກຍູ້ ແລະເປີດກວ້າງໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຫົວໜ່ວຍແຮງງານຕ່າງໆ ທັງພາຍໃນ ແລະຕ່າງປະເທດ ມີສ່ວນຮ່ວມເຂົ້າໃນການພັດທະນາວຽກງານການສຶກສາຊັ້ນສູງ.

ມາດຕາ 5 ຫຼັກການການເຄື່ອນໄຫວວຽກງານການສຶກສາຊັ້ນສູງ

ການເຄື່ອນໄຫວວຽກງານການສຶກສາຊັ້ນສູງ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ຮັບປະກັນການພັດທະນາການສຶກສາຊັ້ນສູງ ໃຫ້ມີຄຸນນະພາບ ແລະສອດຄ່ອງກັບແຜນຄວາມຕ້ອງການພັດທະນາຊັບພະຍາກອນມະນຸດ ແລະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຮັບປະກັນຈັດຕັ້ງການຮຽນ-ການສອນ ຕາມ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ;
3. ຮັບປະກັນການຮຽນແບບຕໍ່ເນື່ອງ ແລະເຊື່ອມຕໍ່ ຕາມນະໂຍບາຍການສຶກສາຕະຫຼອດຊີວິດ;

4. ຮັບປະກັນໃຫ້ກຸ່ມເປົ້າໝາຍ ຜູ້ທຸກຍາກ, ແມ່ຍິງ, ຊົນເຜົ່າ ແລະຜູ້ດ້ອຍໂອກາດ ໄດ້ເຂົ້າຮຽນຢ່າງເປັນທຳ.

**ມາດຕາ 6 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາກລັດ ແລະເອກະຊົນ ທີ່ເຄື່ອນໄຫວວຽກງານ ກ່ຽວກັບການສຶກສາຊັ້ນສູງທັງພາຍໃນ ແລະຕ່າງປະເທດ ຢູ່ ສປປ ລາວ.

## ໝວດທີ 2
## ລະບົບການສຶກສາຊັ້ນສູງ

**ມາດຕາ 7 ໂຄງປະກອບການສຶກສາຊັ້ນສູງ**

ການສຶກສາຊັ້ນສູງ ເປັນອົງປະກອບໜຶ່ງ ຢູ່ໃນລະບົບການສຶກສາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາ ຊຶ່ງປະກອບມີການສຶກສາລະດັບຕ່າງໆ ດັ່ງນີ້:

1. ອະນຸປະລິນຍາ: ແມ່ນການສຶກສາວິຊາການລະດັບຕົ້ນ ຂອງການສຶກສາຊັ້ນສູງ ເພື່ອກໍ່ສ້າງນັກວິຊາການ, ນັກວິຊາສະເພາະ. ຜູ້ທີ່ຮຽນຈົບລະດັບອະນຸປະລິນຍາ ສາມາດຮຽນຕໍ່ເນື່ອງ ຫຼື ເຊື່ອມຕໍ່ໃນລະດັບປະລິນຍາຕີ;
2. ປະລິນຍາຕີ: ແມ່ນລະດັບການສຶກສາວິຊາການລະດັບສູງ ໃນສາຂາວິຊາສະເພາະ ຂະແໜງການຕ່າງໆທາງວິທະຍາສາດທຳມະຊາດ-ສັງຄົມ, ການເມືອງ-ການປົກຄອງ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະອື່ນໆ ຕາມຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ;
3. ປະລິນຍາໂທ: ແມ່ນລະດັບການສຶກສາວິຊາການ ຕໍ່ຈາກປະລິນຍາຕີ, ລົງເລິກການຄົ້ນຄວ້າວິທະຍາສາດໃນສາຂາວິຊາສະເພາະຂະແໜງການໃດໜຶ່ງ;
4. ປະລິນຍາເອກ: ແມ່ນລະດັບການສຶກສາວິຊາການສູງສຸດ ໂດຍລົງເລິກໃນການຄົ້ນຄວ້າວິທະຍາສາດໃນຫົວຂໍ້ໃດໜຶ່ງ.

ນອກນັ້ນ, ຍັງມີລະດັບຫຼັງປະລິນຍາຕີ ແມ່ນການສຶກສາລົງເລິກ ໃນຂະແໜງວິຊາສະເພາະໃດໜຶ່ງ ຄື: ລົງເລິກຂະແໜງວິຊາ, ຊ່ຽວຊານຂັ້ນ 1 ແລະຊ່ຽວຊານຂັ້ນ 2.

**ມາດຕາ 8 ວຸດທິການສຶກສາຊັ້ນສູງ, ການນຳໃຊ້ ແລະການທຽບວຸດທິການສຶກສາ**

1. ວຸດທິການສຶກສາຊັ້ນສູງ ແມ່ນການຢັ້ງຢືນເຖິງຜົນສຳເລັດ ຂອງການສຶກສາຊັ້ນສູງ ທີ່ກຳນົດໄວ້ໃນໂຄງປະກອບລະດັບການສຶກສາຊັ້ນສູງ ຕາມມາດຕາ 7 ຂອງດຳລັດສະບັບນີ້, ຊຶ່ງຈະໄດ້ຂຽນໄວ້ຢູ່ໃນປະກາສະນີຍະບັດ ຂອງຜູ້ຮຽນທີ່ສຳເລັດຕາມລະດັບຫຼັກສູດ ດັ່ງນີ້:
   - ສຳເລັດຫຼັກສູດອະນຸປະລິນຍາ ໄດ້ຮັບປະກາສະນີຍະບັດອະນຸປະລິນຍາ, ຂຽນຫຍໍ້ ອປ. (ພາສາອັງກິດ: Associate Degree), ທຽບເທົ່າກັບ ປະກາສະນີຍະບັດວິຊາຊີບຊັ້ນສູງ (Higher Vocational Diploma);

- ສຳເລັດຫຼັກສູດປະລິນຍາຕີ ໄດ້ຮັບປະກາສະນີຍະບັດປະລິນຍາຕີ, ຂຽນຫຍໍ້: ປຕ. (ພາສາອັງກິດ: Bachelor Degree);
- ສຳເລັດຫຼັກສູດປະລິນຍາໂທ ໄດ້ຮັບປະກາສະນີຍະບັດປະລິນຍາໂທ, ຂຽນຫຍໍ້: ປທ. (ພາສາອັງກິດ: Master Degree);
- ສຳເລັດຫຼັກສູດປະລິນຍາເອກ ໄດ້ຮັບປະກາສະນີຍະບັດປະລິນຍາເອກ, ຂຽນຫຍໍ້: ປອ. (ພາສາອັງກິດ: Doctoral Degree, ຂຽນຫຍໍ້: Ph.D.; Dr.Sc.; Dr.Med.;.... ຫຼື ຂຽນຕາມການກຳນົດວຸດທິການສຶກສາຂອງສາກົນ);

2. ການສຶກສາຕາມຫຼັກສູດ ຫຼັງປະລິນຍາຕີ, ຊ່ຽວຊານ, ຫຼັງປະລິນຍາໂທ ແລະ ຫຼັງປະລິນຍາເອກ ແມ່ນຈະໄດ້ຮັບການຢັ້ງຢືນ ລະດັບຄວາມຮູ້ ແລະວຸດທິ ຕາມເນື້ອໃນ ແລະໄລຍະເວລາ ທີ່ກຳນົດໄວ້ໃນການປະຕິບັດຂອງແຕ່ລະຫຼັກສູດ;
3. ການນຳໃຊ້ຊື່ຫຍໍ້ວຸດທິການສຶກສາ: ຜູ້ຮຽນທີ່ສຳເລັດການສຶກສາ ຕາມຫຼັກສູດຂອງລະດັບການສຶກສາຊັ້ນສູງ ມີສິດນຳໃຊ້ອັກສອນຫຍໍ້ ຂອງວຸດທິການສຶກສາ ເປັນພາສາລາວ ຫຼືພາສາອັງກິດ ຕາມການກຳນົດໄວ້ໃນແຕ່ລະຫຼັກສູດ ເພື່ອຂຽນນຳໜ້າຊື່ ຫຼືຫຼັງນາມສະກຸນ ຂອງຕົນເອງ ຕາມຄວາມສະໝັກໃຈ;
4. ປະລິນຍາເອກກິດຕິມະສັກ (Honorary Doctor) ແມ່ນວຸດທິການສຶກສາ ມອບເປັນກຽດ ໃຫ້ແກ່ບຸກຄົນໃດໜຶ່ງ ທີ່ມີຜົນງານດີເດັ່ນ ໃນການພັດທະນາເສດຖະກິດ-ສັງຄົມ ໂດຍສະຖາບັນການສຶກສາຊັ້ນສູງ ທີ່ມີຖານະ ມະຫາວິທະຍາໄລ ຫຼືທຽບເທົ່າ ຈາກພາຍໃນປະເທດ ຫຼື ຕ່າງປະເທດ. ວຸດທິ "ກິດຕິມະສັກ" ບໍ່ແມ່ນວຸດທິສຳເລັດການສຶກສາ ແລະບໍ່ມີຜົນຕໍ່ການປະຕິບັດນະໂຍບາຍເງິນເດືອນ;
5. ຜູ້ຮຽນທີ່ສຳເລັດການສຶກສາຊັ້ນສູງທຸກລະດັບ ຈາກຕ່າງປະເທດ ຈະຖືກຮັບຮູ້, ຢັ້ງຢືນ ແລະທຽບວຸດທິການສຶກສາ ຕາມລະດັບການສຶກສາຊັ້ນສູງ ຂອງ ສປປ ລາວ ໂດຍກະຊວງສຶກສາທິການ ແລະກິລາ.

ມອບໃຫ້ ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະກິລາ ກຳນົດລະບຽບການ ກ່ຽວກັບການຮັບຮູ້, ການຢັ້ງຢືນ, ການທຽບ, ການຕໍ່ເນື່ອງ ແລະເຊື່ອມຕໍ່ ລະຫວ່າງ ວຸດທິການສຶກສາ ຢູ່ພາຍໃນປະເທດ ແລະຈາກຕ່າງປະເທດ.

**ມາດຕາ 9 ໜ້າທີ່ຂອງສະຖາບັນການສຶກສາຊັ້ນສູງ**

ສະຖາບັນການສຶກສາຊັ້ນສູງ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງການຮຽນ-ການສອນ ແລະການຝຶກອົບຮົມ;
2. ຈັດຕັ້ງການຄົ້ນຄວ້າ ແລະເຜີຍແຜ່ຜົນສຳເລັດຂອງການຄົ້ນຄວ້າວິທະຍາສາດ;
3. ບໍລິການວິຊາການໃຫ້ແກ່ສັງຄົມ;
4. ປົກປັກຮັກສາ ແລະສົ່ງເສີມສິລະປະ ວັດທະນະທຳຂອງຊາດ ສົມທົບກັບ ການຮັບເອົາວັດທະນະທຳອັນດີງາມ ແລະກ້າວໜ້າຂອງໂລກ;
5. ຮ່ວມມືກັບສະຖາບັນການສຶກສາ ແລະອົງການຈັດຕັ້ງຂອງພາກພື້ນ ແລະສາກົນ;

6. ປະຕິບັດໜ້າທີ່ອື່ນ ຕາມຄວາມຕ້ອງການ ຂອງການພັດທະນາທ້ອງຖິ່ນ ແລະຂະແໜງການ ແລະຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະຕາມການມອບໝາຍ.

**ມາດຕາ 10 ສະຖານການສຶກສາຊັ້ນສູງ**

ສະຖານການສຶກສາຊັ້ນສູງ ໄດ້ຈັດລະດັບ ດັ່ງນີ້:

1. ວິທະຍາໄລ (College) ແມ່ນສະຖານການສຶກສາຊັ້ນສູງ, ສ້າງຕັ້ງຂຶ້ນຕາມຄວາມຕ້ອງ ການຂອງການພັດທະນານັກວິຊາການ ຫຼືວິຊາສະເພາະຂະແໜງການ ຢູ່ສູນກາງ, ທ້ອງຖິ່ນ ແລະ ຊຸມຊົນ, ມີໜ້າທີ່ຕົ້ນຕໍໃນການຈັດຕັ້ງການຮຽນ-ການສອນ ຫຼັກສູດລະດັບອະນຸປະລິນຍາ ຕາມຂອບວຸດທິການສຶກສາແຫ່ງຊາດ ຕາມການອະນຸມັດຂອງກະຊວງສຶກສາທິການ ແລະກິລາ. ວິທະຍາໄລ ຍັງສາມາດສ້າງຕັ້ງຂຶ້ນໄດ້ ຢູ່ພາຍໃນມະຫາວິທະຍາໄລ ທີ່ເປັນ ມະຫາວິທະຍາໄລສັງລວມ;
2. ສະຖາບັນ (Institute) ແມ່ນສະຖານການສຶກສາຊັ້ນສູງ, ສ້າງຕັ້ງຂຶ້ນຕາມຄວາມຕ້ອງການຂອງຂະແໜງການຕ່າງໆ, ມີຖານະທຽບເທົ່າ ຫຼືສູງກວ່າວິທະຍາໄລ; ສາມາດເປີດສອນຫຼັກສູດລະດັບອະນຸປະລິນຍາ; ປະລິນຍາຕີຕໍ່ເນື່ອງ ຫຼືເຊື່ອມຕໍ່ ແລະປະລິນຍາຕີປົກກະຕິ ຕາມການອະນຸມັດຂອງກະຊວງສຶກສາທິການ ແລະກິລາ; ເປັນສະຖານທີ່ຝຶກອົບຮົມວິຊາສະເພາະໄລຍະສັ້ນ; ດຳເນີນການຄົ້ນຄວ້າວິທະຍາສາດ, ສຳຫຼວດ, ຄຸ້ມຄອງຂໍ້ມູນຂ່າວສານ ແລະໃຫ້ບໍລິການວິຊາການຂອງຂະແໜງການໃດໜຶ່ງ ຫຼືຫຼາຍຂະແໜງການ ຕາມໜ້າທີ່, ພາລະບົດບາດ ທີ່ກຳນົດໄວ້ໃນການສ້າງຕັ້ງ ສະຖາບັນ;
3. ວິທະຍາຄານ (Academy) ແມ່ນສະຖານການສຶກສາຊັ້ນສູງ, ສ້າງຕັ້ງຂຶ້ນຕາມຄວາມຕ້ອງການສະເພາະຂອງຂະແໜງການ ໂດຍສະເພາະໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະ ຫງົບ ຫຼືຂະແໜງການວິຊາສະເພາະໃດໜຶ່ງ; ມີຖານະທຽບເທົ່າ ຫຼືສູງກວ່າວິທະຍາໄລ; ສາມາດເປີດສອນຫຼັກສູດລະດັບອະນຸປະລິນຍາ; ປະລິນຍາຕີຕໍ່ເນື່ອງ ຫຼືເຊື່ອມຕໍ່, ປະລິນຍາຕີປົກກະຕິ ແລະສູງກວ່າປະລິນຍາຕີ ຕາມການອະນຸມັດ ຂອງການຈັດຕັ້ງທີ່ກ່ຽວຂ້ອງ ແລະກະຊວງສຶກສາທິການ ແລະກິລາ; ສາມາດຈັດການຝຶກອົບຮົມວິຊາສະເພາະໄລຍະສັ້ນ; ດຳເນີນການຄົ້ນຄວ້າວິທະຍາສາດ, ສຳຫຼວດ, ຄຸ້ມຄອງ ຂໍ້ມູນຂ່າວສານ ແລະການໃຫ້ບໍລິການວິຊາການຂອງຂະແໜງການຕາມໜ້າທີ່ ແລະພາລະບົດບາດ ທີ່ໄດ້ກຳນົດໄວ້ໃນລະບຽບການຂອງລັດຖະບານ ຫຼືຂອງຂະແໜງການທີ່ກ່ຽວຂ້ອງ.
4. ມະຫາວິທະຍາໄລ ແລະສະຖາບັນທຽບເທົ່າມະຫາວິທະຍາໄລ (ລະດັບຊາດ) ແມ່ນສະຖານການສຶກສາຊັ້ນສູງລະດັບສູງສຸດ ຂອງໂຄງປະກອບການສຶກສາຊັ້ນສູງແຫ່ງຊາດ, ສ້າງຕັ້ງຂຶ້ນຕາມຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ຂອງຊາດ, ມີພາລະບົດບາດ ແລະໜ້າທີ່ ໃນການຈັດຕັ້ງການຮຽນ-ການສອນ ຫຼັກສູດວິຊາການລະດັບສູງ ເລີ່ມແຕ່ລະດັບອະນຸປະລິນຍາຈົນເຖິງລະດັບປະລິນຍາເອກ, ມີຄວາມສາມາດໃນການດຳເນີນການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ, ບໍລິການວິຊາການ ແລະສະໜອງຂໍ້ມູນຂ່າວສານກ່ຽວກັບການຄົ້ນຄວ້າວິທະຍາສາດໃຫ້ແກ່ສັງຄົມ. ມະຫາວິທະຍາໄລ ມີວິໄສທັດ, ມີຍຸດທະສາດ ແລະມີ

ແຜນພັດທະນາໃຫ້ເປັນມະຫາວິທະຍາໄລສັງລວມ ຫຼືເປັນມະຫາວິທະຍາໄລ ທີ່ໂດດເດັ່ນສະເພາະຂະແໜງການ ຫຼືການຄົ້ນຄວ້າວິທະຍາສາດ ແລະເຕັກໂນໂລຊີ.

### ມາດຕາ 11 ຮູບແບບການສ້າງຕັ້ງສະຖາບັນການສຶກສາຊັ້ນສູງ

ການສ້າງຕັ້ງສະຖາບັນການສຶກສາຊັ້ນສູງ ໃຫ້ຈັດຕາມຮູບແບບຂອງການລົງທຶນ ດັ່ງນີ້:

1. ຮູບແບບສະຖາບັນຂອງລັດ: ແມ່ນລັດຖະບານລົງທຶນສ້າງຕັ້ງ ແລະພັດທະນາ ໂດຍມອບໝາຍໃຫ້ອົງການຈັດຕັ້ງຂອງລັດຕາມຂະແໜງການຂັ້ນສູນກາງ ຫຼືທ້ອງຖິ່ນຄຸ້ມຄອງໂດຍກົງ, ຮອບດ້ານຕາມພາລະບົດບາດ ແລະໜ້າທີ່ທີ່ກຳນົດໄວ້ໃນກົດໝາຍ ແລະລະບຽບການ;
2. ຮູບແບບສະຖາບັນຂອງລັດ ແລະຊຸມຊົນ ຫຼືລວມໝູ່: ແມ່ນລັດຖະບານລົງທຶນຮ່ວມກັບຊຸມຊົນ ຫຼືລວມໝູ່ ສ້າງຕັ້ງຂຶ້ນ ແລະພັດທະນາ ໂດຍມີການຈັດຕັ້ງຂອງລັດ ຄຸ້ມຄອງທາງວິຊາການ ແລະຊຸມຊົນ ຫຼືລວມໝູ່ ຮັບຜິດຊອບການບໍລິຫານ-ຈັດການ ຕາມພາລະບົດບາດ ແລະໜ້າທີ່ທີ່ກຳນົດໄວ້ໃນກົດໝາຍ ແລະລະບຽບການ.
3. ຮູບແບບສະຖາບັນຂອງເອກະຊົນພາຍໃນ ແລະຕ່າງປະເທດ: ແມ່ນການລົງທຶນໂດຍກົງຂອງເອກະຊົນພາຍໃນ ຫຼືຕ່າງປະເທດ ຊຶ່ງລັດຖະບານມີນະໂຍບາຍຊຸກຍູ້, ສົ່ງເສີມ ແລະຄຸ້ມຄອງດ້ານວິຊາການ; ຜູ້ລົງທຶນຊຶ່ງເປັນບຸກຄົນ ຫຼືນິຕິບຸກຄົນ ມີສິດ ແລະໜ້າທີ່ຄຸ້ມຄອງການບໍລິຫານຕາມພາລະບົດບາດ, ໜ້າທີ່ທີ່ໄດ້ຮັບອະນຸຍາດ ຈາກການຈັດຕັ້ງທີ່ກ່ຽວຂ້ອງ ແລະໃຫ້ປະຕິບັດຕາມກົດໝາຍ ແລະລະບຽບການ.
4. ຮູບແບບສະຖາບັນຂອງຕ່າງປະເທດ ຫຼືອົງການຈັດຕັ້ງສາກົນ: ແມ່ນສະຖາບັນການສຶກສາຊັ້ນສູງທີ່ເປັນການລົງທຶນຂອງພາກລັດ, ພາກທຸລະກິດ, ການຈັດຕັ້ງສາກົນ ຫຼືສະຖາບັນການສຶກສາຂອງຕ່າງປະເທດ ຊຶ່ງລັດຖະບານ ແລະການຈັດຕັ້ງທີ່ກ່ຽວຂ້ອງ ຄຸ້ມຄອງຕາມກົດໝາຍ ແລະ ລະບຽບການ ແລະປະຕິບັດຕາມສັນຍາທີ່ຕົກລົງຮ່ວມກັນ ຂອງສອງຝ່າຍ ຫຼືຫຼາຍຝ່າຍ.

### ມາດຕາ 12 ການຈັດແບ່ງປະເພດສະຖາບັນການສຶກສາຊັ້ນສູງ

ສະຖາບັນການສຶກສາຊັ້ນສູງ ຢູ່ ສປປ ລາວ ຈັດແບ່ງປະເພດຕາມລະບົບການປົກຄອງ, ຕາມພູມມີປະເທດ ແລະຈຸດພິເສດຂອງຂະແໜງການ ດັ່ງນີ້:

ກ. ປະເພດ 1: ສະຖາບັນການສຶກສາຊັ້ນສູງລະດັບຊາດ ແລະນານາຊາດ

- ສະຖາບັນການສຶກສາຊັ້ນສູງລະດັບຊາດ: ແມ່ນລັດຖະບານ ສ້າງຕັ້ງຂຶ້ນ ໂດຍອີງຕາມນະໂຍບາຍ, ແຜນພັດທະນາຊັບພະຍາກອນມະນຸດ ແລະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ມີຄວາມຫຼາກຫຼາຍດ້ານຫຼັກສູດການຮຽນ-ການສອນ, ດ້ານວິຊາການ ແລະການຄົ້ນຄ້ວາວິທະຍາສາດ; ມີບຸກຄະລາກອນ ແລະຄູທີ່ມີວຸດທິການສຶກສາສູງພຽງພໍ, ມີພື້ນຖານໂຄງລ່າງເໝາະສົມ ສາມາດຮັບຜູ້ຮຽນໄດ້ຈຳນວນຫຼາຍ, ມີຄວາມສາມາດໃນການໃຫ້ບໍລິການວິຊາການ ຢ່າງກວ້າງຂວາງ ແລະມີຄວາມສາມາດເປັນເຈົ້າຕົນເອງທາງວິຊາການ.
- ສະຖາບັນການສຶກສາຊັ້ນສູງລະດັບນານາຊາດ: ແມ່ນສະຖາບັນການສຶກສາທີ່ສ້າງຕັ້ງຂຶ້ນຕາມຮູບແບບໃດໜຶ່ງທີ່ກຳນົດໄວ້ໃນມາດຕາ 11 ຂອງ ດຳລັດສະບັບນີ້ ຊຶ່ງສາມາດ

ດຳເນີນການຮຽນ-ການສອນ, ການຄົ້ນຄວ້າວິທະຍາສາດ ແລະການໃຫ້ບໍລິການລະດັບສາກົນ, ສາມາດຕອບສະໜອງນະໂຍບາຍ ຂອງລັດຖະບານ ໃນການເຊື່ອມໂຍງກັບພາກພື້ນ ແລະສາກົນ.

ຂ. ປະເພດ 2: ສະຖາບັນການສຶກສາຊັ້ນສູງລະດັບພາກ (ຂົງເຂດ-ບໍລິເວນ)

ສະຖາບັນການສຶກສາຊັ້ນສູງລະດັບພາກ ແມ່ນສະຖາບັນການສຶກສາ ທີ່ສ້າງຕັ້ງຂຶ້ນໂດຍລັດຖະບານ ຕາມຄວາມຕ້ອງການດ້ານການພັດທະນາຊັບພະຍາກອນມະນຸດ ກໍຄືການສ້າງນັກວິຊາການເພື່ອຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ ຢູ່ແຕ່ລະພາກຂອງປະເທດ, ສອດຄ່ອງກັບຈຸດພິເສດ ແລະຄວາມຕ້ອງການຕົວຈິງຂອງຂົງເຂດ-ບໍລິເວນທີ່ໃຫ້ການບໍລິການດ້ານການສຶກສາຊັ້ນສູງ.

ຄ. ປະເພດ 3: ສະຖາບັນການສຶກສາຊັ້ນສູງລະດັບແຂວງ ຫຼືຊຸມຊົນ

ສະຖາບັນການສຶກສາຊັ້ນສູງລະດັບແຂວງ ຫຼືຊຸມຊົນ ແມ່ນສະຖາບັນການສຶກສາ ທີ່ສ້າງຕັ້ງຂຶ້ນໂດຍສູນກາງ ຮ່ວມກັບອົງການປົກຄອງທ້ອງຖິ່ນ ຫຼືຊຸມຊົນ ຊຶ່ງມີພາລະບົດບາດ ແລະໜ້າທີ່ ໃນການເຄື່ອນໄຫວດ້ານການຈັດຕັ້ງການຮຽນ-ການສອນ ແລະການຄົ້ນຄວ້າວິທະຍາສາດ ທີ່ມີຄວາມເໝາະສົມ ແລະສອດຄ່ອງກັບຈຸດພິເສດ ແລະຄວາມຕ້ອງການຕົວຈິງຂອງແຂວງ ຫຼືຊຸມຊົນນັ້ນ.

ງ. ປະເພດ 4: ສະຖາບັນການສຶກສາຊັ້ນສູງສະເພາະຂະແໜງການ

ສະຖາບັນການສຶກສາຊັ້ນສູງສະເພາະຂະແໜງການ ແມ່ນສະຖາບັນການສຶກສາທີ່ສ້າງຕັ້ງຂຶ້ນໂດຍຂະແໜງການທີ່ກ່ຽວຂ້ອງ ຕາມຄວາມຕ້ອງການຂອງການສ້າງນັກວິຊາການ ສະເພາະຂະແໜງການ ຢູ່ຂັ້ນສູນກາງ ຫຼືທ້ອງຖິ່ນ; ມີພາລະບົດບາດ ແລະໜ້າທີ່ ໃນການຈັດຕັ້ງການຮຽນ-ການສອນ ແລະການຄົ້ນຄວ້າວິທະຍາສາດ ທີ່ລົງເລິກວິຊາສະເພາະຮັບໃຊ້ໃຫ້ການພັດທະນາຂະແໜງການ.

ມອບໃຫ້ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງຂັ້ນສູນກາງ ແລະທ້ອງຖິ່ນ ກຳນົດລະບຽບການລະອຽດ ກ່ຽວກັບການຄຸ້ມຄອງ-ບໍລິຫານ, ມາດຕະຖານ ແລະເງື່ອນໄຂຂອງສະຖາບັນການສຶກສາຊັ້ນສູງແຕ່ລະປະເພດ.

**ມາດຕາ 13 ຫຼັກການ ແລະເງື່ອນໄຂການສ້າງຕັ້ງ, ການຂະຫຍາຍ, ການໂຮມ ແລະການແຍກສະຖາບັນການສຶກສາຊັ້ນສູງ**

1. ຫຼັກການລວມ:

ການສ້າງຕັ້ງ, ການຂະຫຍາຍ, ການໂຮມ ແລະການແຍກສະຖາບັນການສຶກສາຊັ້ນສູງ ໃຫ້ປະຕິບັດຕາມຫຼັກການລວມ ດັ່ງນີ້:

(1) ຕອບສະໜອງກັບຄວາມຕ້ອງການຂອງແຜນພັດທະນາຊັບພະຍາກອນມະນຸດ ແລະແຜນ ພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃນແຕ່ລະໄລຍະ;

(2) ສ້າງເງື່ອນໄຂ ແລະເປີດໂອກາດໃຫ້ປະຊາຊົນລາວບັນດາເຜົ່າ ໄດ້ເຂົ້າເຖິງການສຶກສາຊັ້ນສູງຢ່າງສະເໝີພາບ ແລະເປັນທຳ;

(3) ຮັບປະກັນໂຄງປະກອບດ້ານວິຊາການທີ່ມີຄວາມຫຼາກຫຼາຍ ແລະວິຊາສະເພາະລົງເລິກຂະແໜງການ;

(4) ມີວິໄສທັດ, ມີແຜນພັດທະນາຄຸນນະພາບໄລຍະສັ້ນ ແລະໄລຍະຍາວ; ຮັບປະກັນຄວາມຍືນຍົງ ແລະມີການລົງທຶນທີ່ເໝາະສົມ.

2. ເງື່ອນໄຂ:

ການສ້າງຕັ້ງ, ການຂະຫຍາຍ, ການໂຮມ ແລະການແຍກສະຖາບັນການສຶກສາຊັ້ນສູງ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

ກ. ເງື່ອນໄຂລວມ:

(1) ສອດຄ່ອງກັບ ຄວາມຕ້ອງການຕາມ ແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ, ແຜນພັດທະນາຂະແໜງການ ແລະຄວາມຕ້ອງການ ຂອງການພັດທະນາທ້ອງຖິ່ນ;

(2) ມີຄວາມພ້ອມທາງດ້ານບຸກຄະລາກອນການສຶກສາ ແລະມີຜູ້ຮຽນໃນຈຳນວນທີ່ເໝາະສົມ;

(3) ມີຄວາມພ້ອມໃນການລົງທຶນດ້ານພື້ນຖານໂຄງລ່າງ; ວັດຖູປະກອນເຕັກນິກ ແລະງົບປະມານ ເພື່ອການບໍລິຫານ-ຄຸ້ມຄອງທີ່ເໝາະສົມ.

ຂ. ເງື່ອນໄຂສະເພາະ:

ການສ້າງຕັ້ງສະຖາບັນການສຶກສາຊັ້ນສູງ ຮູບແບບທີ່ຂໍ້ 3, 4 ຕາມທີ່ກຳນົດໄວ້ໃນ ມາດຕາ 11 ຂອງດຳລັດສະບັບນີ້ ແລະ ທຸກປະເພດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງດຳລັດສະບັບນີ້, ນອກຈາກເງື່ອນໄຂລວມ ຕາມຂໍ້ (ກ.) ຂ້າງເທິງນີ້ແລ້ວ ຕ້ອງຮັບປະກັນເງື່ອນໄຂສະເພາະ ດັ່ງນີ້:

(1) ຕ້ອງມີແຜນລົງທຶນພື້ນຖານໂຄງລ່າງລະອຽດ ໂດຍໃຫ້ມີເອກະສານຢັ້ງຢືນຄ້ຳປະກັນ ການ ລົງທຶນ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ;

(2) ມີໜັງສືຄ້ຳປະກັນຖານະການເງິນ; ແລະ

(3) ຕ້ອງດຳເນີນການກໍ່ສ້າງ ແລະປະກອບວັດຖູປະກອນເຕັກນິກ ໃຫ້ສຳເລັດໂດຍພື້ນຖານພາຍໃນໄລຍະເວລາຫ້າປີ ພາຍຫຼັງໄດ້ຮັບອະນຸຍາດສ້າງຕັ້ງຢ່າງເປັນທາງການຈາກ ລັດຖະບານ ຫຼືການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ.

ມອບໃຫ້ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ກຳນົດລະບຽບການລະອຽດກ່ຽວກັບເງື່ອນໄຂການສ້າງຕັ້ງ, ການຂະຫຍາຍ, ການໂຮມ ແລະການແຍກ ສະຖາບັນການສຶກສາຊັ້ນສູງ.

**ມາດຕາ 14 ເງື່ອນໄຂການປິດຊົ່ວຄາວ ແລະຍຸບເລີກຖາວອນ ສະຖາບັນການສຶກສາຊັ້ນສູງ**

ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບຈະຖືກປິດຊົ່ວຄາວ ຫຼືຍຸບເລີກຖາວອນ ຕາມແຕ່ລະກໍລະນີ ດັ່ງນີ້:

(1) ຜິດຕໍ່ແນວທາງນະໂຍບາຍ, ລະເມີດກົດໝາຍ ແລະລະບຽບການ;

(2) ເຄື່ອນໄຫວບໍ່ຖືກກັບພາລະບົດບາດ ແລະຈຸດປະສົງເປົ້າໝາຍຂອງສະຖາບັນ;

(3) ບໍ່ປັບປຸງ ຫຼືບໍ່ພັດທະນາຄຸນນະພາບ ຕາມການແນະນຳຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;

(4) ມີຄຳຮ້ອງຂໍປິດຊົ່ວຄາວ ຫຼືຍຸບເລີກຖາວອນ ຈາກບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ດ້ວຍເຫດຜົນຕ່າງໆ;

(5) ມີການຮ້ອງຟ້ອງ ໂດຍບຸກຄົນ ຫຼືການຈັດຕັ້ງ ຫຼືທາງສຽງຈາກສັງຄົມທົ່ວໄປ ດ້ວຍເຫດຜົນຂອງປາກົດການຫຍໍ້ທໍ້ດ້ານຕ່າງໆ.

ມາດຕາ 15 ການອະນຸຍາດສ້າງຕັ້ງ, ການຂະຫຍາຍ, ການໂຮມ, ການແຍກ, ການປິດຊົ່ວຄາວ ແລະ ການຍຸບເລີກຖາວອນ ສະຖາບັນການສຶກສາຊັ້ນສູງ

ການອະນຸຍາດ ສ້າງຕັ້ງ, ການຂະຫຍາຍ, ການໂຮມ, ການແຍກ, ການປິດຊົ່ວຄາວ ແລະ ການຍຸບເລີກຖາວອນ ສະຖາບັນການສຶກສາຊັ້ນສູງໃຫ້ປະຕິບັດ ດັ່ງນີ້:

(1) ນາຍົກລັດຖະມົນຕີ ອະນຸຍາດການສ້າງຕັ້ງ, ການຂະຫຍາຍວິທະຍາເຂດ, ການໂຮມ, ການແຍກ ແລະການຍຸບເລີກຖາວອນ ສະຖາບັນການສຶກສາຊັ້ນສູງປະເພດ 1 ທຸກຮູບແບບ (ລະດັບຊາດ ແລະນານາຊາດ) ຕາມການສະເໜີຂອງກະຊວງສຶກສາທິການ ແລະກິລາ ແລະ ການຈັດຕັ້ງຂະແໜງການກ່ຽວຂ້ອງ;

(2) ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ອະນຸຍາດການສ້າງຕັ້ງ, ການຂະຫຍາຍວິທະຍາເຂດ, ການໂຮມ, ການແຍກ ແລະການຍຸບເລີກຖາວອນ ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ ຂອງປະເພດ: 2, 3 ແລະ 4 (ລະດັບພາກ, ແຂວງ ຫຼືຊຸມຊົນ ແລະ ສະເພາະຂະແໜງການ) ຕາມການສະເໜີຂອງອົງການຈັດຕັ້ງ ແລະຂະແໜງ ການທີ່ກ່ຽວຂ້ອງ; ມີສິດສັ່ງປິດ ຫຼືໂຈະການເຄື່ອນໄຫວຊົ່ວຄາວ ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ, ທຸກປະເພດ ໂດຍອີງຕາມແຕ່ລະກໍລະນີ ທີ່ກຳນົດໄວ້ໃນມາດຕາ 14 ຂອງດຳລັດສະບັບນີ້ ແລະຕາມການສະເໜີຂອງການຈັດຕັ້ງທີ່ກ່ຽວຂ້ອງ.

ມອບໃຫ້ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ກຳນົດລະອຽດກ່ຽວກັບລະບຽບ, ຂັ້ນຕອນການປະກອບເອກະສານ ເພື່ອຂໍອະນຸຍາດສ້າງຕັ້ງ, ຂະຫຍາຍໂຮມ, ແຍກ, ປິດຊົ່ວຄາວ ແລະ ຍຸບເລີກຖາວອນ ສະຖາບັນການສຶກສາຊັ້ນສູງທຸກຮູບແບບແລະທຸກປະເພດ.

## ໝວດທີ 3
## ການຈັດຕັ້ງການຮຽນ-ການສອນ

ມາດຕາ 16 ເງື່ອນໄຂການຈັດຕັ້ງການຮຽນ-ການສອນສາຂາວິຊາສະເພາະຕ່າງໆ

ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ, ທຸກປະເພດ ສາມາດຈັດຕັ້ງການຮຽນ-ການສອນ ສາຂາວິຊາສະເພາະຂະແໜງການ ຫຼືລົງເລິກຂະແໜງການ ລະດັບອະນຸປະລິນຍາ, ປະລິນຍາຕີ, ປະລິນຍາໂທ, ປະລິນຍາເອກ ແລະການສຶກສາຫຼັງປະລິນຍາ (Post graduate) ລະດັບຕ່າງໆໄດ້ ໂດຍມີເງື່ອນໄຂດັ່ງນີ້:

(1) ສອດຄ່ອງກັບຄວາມຕ້ອງການ ດ້ານການກໍ່ສ້າງນັກວິຊາການ ຂອງຂະແໜງການວິຊາສະເພາະ ເພື່ອການພັດທະນາເສດຖະກິດ-ສັງຄົມ ມະຫາພາກ ແລະຈຸລະພາກ (ທ້ອງຖິ່ນ);

(2) ມີບຸກຄະລາກອນການສຶກສາ, ຄູສອນ, ນັກວິທະຍາສາດ ທີ່ມີລະດັບວິຊາສະເພາະ ແລະວຸດທິການສຶກສາທີ່ເໝາະສົມກັບລະດັບຂອງຫຼັກສູດ ທີ່ຈັດຕັ້ງການຮຽນ-ການສອນ ຫຼືການຄົ້ນຄວ້າ ເພື່ອຮັບປະກັນໃຫ້ມີຄຸນນະພາບສູງ;

(3) ມີພື້ນຖານໂຄງລ່າງ, ອາຄານຫ້ອງຮຽນ, ຫ້ອງທົດລອງ, ຫ້ອງສະໝຸດ, ວັດຖຸປະກອນເຕັກ ນິກ ແລະເອກະສານ-ຕໍາລາ ຮັບໃຊ້ການຮຽນ-ການສອນຢ່າງຄົບຖ້ວນໃນຂັ້ນພື້ນຖານ;

(4) ມີຫຼັກສູດການສອນທີ່ຖືກຕ້ອງຕາມມາດຕະຖານຫຼັກສູດແຫ່ງຊາດ ແລະຮັບປະກັນປະລິມານຄວາມຮູ້ ເພື່ອການສຶກສາຕໍ່ເນື່ອງ ຫຼືເຊື່ອມຕໍ່ ໃຫ້ຜູ້ຮຽນ;

(5) ມີແຜນກໍານົດລວມ ການເປີດສອນຫຼັກສູດສາຂາວິຊາສະເພາະຂະແໜງການຕ່າງໆ ໂດຍຜ່ານການຮັບຮອງ ແລະອະນຸມັດ ຂອງກະຊວງສຶກສາທິການ ແລະກິລາ ຕາມການສະເໜີຂອງສະຖາບັນການສຶກສາຊັ້ນສູງ ແລະການຈັດຕັ້ງຂະແໜງການທີ່ກ່ຽວຂ້ອງ.

ຂະທີການບໍດີ ມະຫາວິທະຍາໄລ ຫຼືຫົວໜ້າສະຖາບັນ ທີ່ມີຖານະ ມະຫາວິທະຍາໄລ (ສະຖາບັນລະດັບຊາດ) ມີສິດຈັດຕັ້ງເປີດການຮຽນ-ການສອນ ດ້ວຍຕົນເອງ ກ່ຽວກັບຫຼັກສູດສາຂາວິຊາສະເພາະຂະແໜງການໃດໜຶ່ງ ທີ່ຢູ່ໃນແຜນກໍານົດລວມ ຊຶ່ງໄດ້ຜ່ານການຮັບຮອງ ຂອງກະຊວງສຶກສາທິການ ແລະກິລາ ແລ້ວ.

**ມາດຕາ 17 ການຮັບນັກສຶກສາ**

1. ແຜນຮັບນັກສຶກສາ:

   (1) ແຜນຮັບນັກສຶກສາຂອງສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ ແລະທຸກປະເພດ ໃຫ້ກໍານົດບົນພື້ນຖານຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ແລະສອດຄ່ອງກັບ ແຜນພັດທະນາຊັບພະຍາກອນມະນຸດ ຂອງສູນກາງ ແລະທ້ອງຖິ່ນ; ມີຄວາມເໝາະສົມກັບເງື່ອນໄຂທາງດ້ານຄວາມສາມາດ ຂອງຄູ; ແທດເໝາະກັບເງື່ອນໄຂ ທາງດ້ານພື້ນຖານໂຄງລ່າງ ແລະວັດຖຸປະກອນເຕັກນິກ ໂດຍຜ່ານການຮັບຮອງ ຂອງການຈັດຕັ້ງຂະແໜງການທີ່ກ່ຽວຂ້ອງ ແລະອະນຸມັດຂອງກະຊວງສຶກສາທິການ ແລະກິລາ;

   (2) ສະຖາບັນການສຶກສາຊັ້ນສູງແຕ່ລະແຫ່ງ ເປັນຜູ້ກໍານົດແຜນຮັບນັກສຶກສາ ໃນແຕ່ລະສົກຮຽນຕາມແຜນພັດທະນາຊັບພະຍາກອນມະນຸດ ຂອງສູນກາງ, ຂອງທ້ອງຖິ່ນ ແລະ ຕາມຄວາມສາມາດຮັບຕົວຈິງຂອງສະຖາບັນ; ຮັບຜິດຊອບໃນການປະກາດຮັບສະໝັກຕາມເງື່ອນໄຂ ແລະມາດຕະຖານດ້ານຄຸນນະພາບ ຂອງສະຖາບັນຕົນເອງ;

   (3) ກໍລະນີສະຖາບັນການສຶກສາຊັ້ນສູງແຫ່ງໃດໜຶ່ງ ຮັບນັກສຶກສາເກີນແຜນກໍານົດ ຫຼືບໍ່ຖືກຕ້ອງຕາມທີ່ປະກາດໄວ້ ຈະຖືກດໍາເນີນການກວດສອບ-ກວດກາ ຕາມກົດໝາຍ ແລະລະບຽບການ;

   (4) ວິທີການຄັດເລືອກຮັບນັກສຶກສາ ສາມາດດໍາເນີນຕາມ ສາມ ຮູບແບບ ດັ່ງນີ້:

      ກ. ຕົວເລກແບ່ງປັນ (ໂຄຕາ) ຕາມແຜນມະຫາພາກໃຫ້ຄັດເລືອກເອົາ ຕາມຜົນການຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍ ຫຼືທຽບເທົ່າ (ຄະແນນເສັງຈົບ, ຄະແນນ ສະສົມ ໃນແຕ່ລະສົກຮຽນ ແລະຄຸນສົມບັດ);

ຂ. ດຳເນີນການສອບເສັງ ເພື່ອຄັດເລືອກຕາມລຳດັບຄະແນນຂອງຜົນສອບເສັງ;

ຄ. ດຳເນີນການຕາມ ຮູບແບບປະສົມ ລະຫວ່າງສອບເສັງ ແລະຄັດເລືອກຕາມຜົນການຮຽນມັດທະຍົມຕອນປາຍ ຫຼືທຽບເທົ່າ (ກ. + ຂ.).

(5) ສະຖາບັນການສຶກສາຊັ້ນສູງມີສິດກຳນົດເລືອກເອົາວິທີການຄັດເລືອກຮັບນັກສຶກສາດ້ວຍຕົນເອງ, ນຳໃຊ້ສິດ ແລະປະຕິບັດໜ້າທີ່ໃນການຮັບນັກສຶກສາ ຕາມການມອບໝາຍ ຂອງກະຊວງສຶກສາທິການ ແລະກິລາ ແລະການຈັດຕັ້ງທີ່ກ່ຽວຂ້ອງ ດ້ວຍຄວາມເປັນທຳ ແລະໂປ່ງໃສ.

(6) ການລົງທະບຽນ: ນັກສຶກສາທີ່ຖືກຮັບຮອງ ດ້ວຍຜົນການຄັດເລືອກ ຕາມໜຶ່ງໃນສາມຮູບແບບຂ້າງເທິງນີ້ຈະໄດ້ຮັບແຈ້ງການ ຈາກສະຖາບັນການສຶກສາຊັ້ນສູງ ທີ່ກ່ຽວຂ້ອງໃຫ້ລົງທະບຽນເປັນນັກສຶກສາ ຕາມການກຳນົດເວລາໃນແຕ່ລະສົກຮຽນ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ຮັບຮອງ ແລະ ອະນຸມັດແຜນລວມໃນການຮັບນັກສຶກສາ ຂອງສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ ແລະທຸກປະເພດ ໃນຂອບເຂດທົ່ວປະເທດ ແລະກຳນົດລະບຽບການລະອຽດ ກ່ຽວກັບວິທີການ ແລະ ເອກະສານຂໍ້ມູນ ສຳລັບການຄັດເລືອກ ແລະຮັບນັກສຶກສາ.

### ມາດຕາ 18 ໄລຍະເວລາຮຽນ ແລະປະຕິທິນການສຶກສາ ຂອງ ສະຖາບັນການສຶກສາຊັ້ນສູງ

1. ໄລຍະເວລາຮຽນ: ໄລຍະເວລາຮຽນ ຂອງການສຶກສາຊັ້ນສູງ ແມ່ນໃຫ້ປະຕິບັດຕາມມາດຕະຖານຫຼັກສູດແຫ່ງຊາດ ດັ່ງນີ້:

(1) ລະດັບອະນຸປະລິນຍາ: ຫຼັກສູດປົກກະຕິໃຊ້ເວລາ ສອງປີຂຶ້ນໄປ, ຫຼັກສູດຕໍ່ເນື່ອງໃຊ້ເວລາ ໜຶ່ງປີເຄິ່ງ ຂຶ້ນໄປ;

(2) ປະລິນຍາຕີ: ຫຼັກສູດປົກກະຕິໃຊ້ເວລາສີ່ປີຂຶ້ນໄປ, ຫຼັກສູດຕໍ່ເນື່ອງໃຊ້ເວລາສອງປີຂຶ້ນໄປ;

(3) ລົງເລິກຂະແໜງວິຊາ ໃຊ້ເວລາ ໜຶ່ງປີ ຂຶ້ນໄປ;

(4) ຊ່ຽວຊານຊັ້ນ 1 ໃຊ້ເວລາ ສອງປີ ຂຶ້ນໄປ;

(5) ຊ່ຽວຊານຊັ້ນ 2 ໃຊ້ເວລາ ສາມປີ ຂຶ້ນໄປ;

(6) ປະລິນຍາໂທ ໃຊ້ເວລາ ສອງປີ ຂຶ້ນໄປ;

(7) ປະລິນຍາເອກ ໃຊ້ເວລາ ສາມປີ ຂຶ້ນໄປ.

2. ປະຕິທິນການສຶກສາ:

(1) ການສຶກສາລະດັບອະນຸປະລິນຍາ ແລະປະລິນຍາຕີປີທີ 1 (ຮັບໃໝ່) ໃຫ້ເລີ່ມຕົ້ນສົກຮຽນ ໃນວັນທີ 15 ຕຸລາ.

(2) ການສຶກສາລະດັບອະນຸປະລິນຍາ ແລະ ປະລິນຍາຕີແຕ່ປີທີ 2 ຂຶ້ນໄປ ໃຫ້ເລີ່ມຕົ້ນສົກຮຽນ ວັນທີ 01 ຕຸລາ.

(3) ການສຶກສາລະດັບອື່ນ ຫຼັງປະລິນຍາຕີຂຶ້ນໄປ ໃຫ້ປະຕິບັດຕາມແຜນການຮຽນ-ການສອນ ແລະແຜນຄົ້ນຄວ້າວິທະຍາສາດ ຂອງຫຼັກສູດ ຫຼືໂຄງການທີ່ສະຖາບັນການສຶກສານັ້ນໄດ້ຮັບອະນຸມັດນຳໃຊ້ ແລະດຳເນີນການ.

ມາດຕາ 19 ຫຼັກສູດ, ຕຳລາ, ເອກະສານ ແລະພາສາທີ່ນຳໃຊ້ ສຳລັບການຮຽນ-ການສອນ

1. ຫຼັກສູດການສຶກສາຊັ້ນສູງ:

(1) ການພັດທະນາຫຼັກສູດທຸກລະດັບຂອງການສຶກສາຊັ້ນສູງໃຫ້ປະຕິບັດຕາມມາດຕະຖານຫຼັກ ສູດການສຶກສາຊັ້ນສູງແຫ່ງຊາດ ທີ່ກະຊວງສຶກສາທິການ ແລະກິລາ ກຳນົດ;

(2) ການສ້າງເນື້ອໃນຫຼັກສູດ ຕ້ອງອີງໃສ່ຂອບວຸດທິການສຶກສາແຫ່ງຊາດ ໂດຍກຳນົດຄວາມຮູ້, ຄວາມຊຳນານງານ, ການນຳໃຊ້ ແລະພາກປະຕິບັດຕົວຈິງ (ການຝຶກຫັດ-ຝຶກງານ) ເຂົ້າໃນລາຍວິຊາ ຕາມແຕ່ລະລະດັບການສຶກສາ;

(3) ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ຮັບຮອງ ແລະອະນຸມັດນຳໃຊ້ຫຼັກສູດການສຶກສາຊັ້ນສູງ ທຸກລະດັບ ຕາມການສະເໜີຂອງສະຖາບັນການສຶກສາຊັ້ນສູງແລະອົງການຈັດຕັ້ງຂອງຂະແໜງການທີ່ກ່ຽວຂ້ອງ;

2. ຕຳລາ ແລະເອກະສານ ການຮຽນ-ການສອນ:

(1) ຕຳລາ ແລະເອກະສານການຮຽນ-ການສອນ ທີ່ນຳໃຊ້ຢູ່ສະຖາບັນການສຶກສາຊັ້ນສູງຕ້ອງ ມີມາດຕະຖານດ້ານປະລິມານຄວາມຮູ້-ຄວາມສາມາດ ທີ່ຮັບໃຊ້ໃຫ້ຫຼັກສູດການຮຽນ-ການສອນຂອງວິຊາຮຽນ, ຮັບໃຊ້ເປົ້າໝາຍຂອງຄູ ແລະຜູ້ຮຽນ ແຕ່ລະລະດັບ;

(2) ສະຖາບັນການສຶກສາຊັ້ນສູງທຸກລະດັບ ຕ້ອງມີຫ້ອງສະໝຸດເປັນຂອງຕົນເອງ, ມີປຶ້ມ, ມີເອກະສານ, ຕຳລາທາງວິທະຍາສາດ-ວິຊາການ ຄົບຖ້ວນໃນຂັ້ນພື້ນຖານ ຫຼືມີຫ້ອງສະໝຸດເອເລັກໂຕຣນິກ ເພື່ອການສຶກສາທົ່ວໄປ ແລະຮັບໃຊ້ການຄົ້ນຄວ້າວິທະຍາສາດ ຂອງຄູ ແລະຜູ້ຮຽນ;

(3) ອະທິການບໍດີ, ຫົວໜ້າ ຫຼືຜູ້ອຳນວຍການສະຖາບັນການສຶກສາຊັ້ນສູງ ມີໜ້າທີ່ຄັດເລືອກ ແລະອະນຸມັດນຳໃຊ້ປຶ້ມຕຳລາ, ເອກະສານການຮຽນ-ການສອນ ທີ່ເປັນຜົນງານໃນການຄົ້ນຄວ້າ, ຮຽບຮຽງ ຫຼືຂຽນເອງ ຂອງພະນັກງານ, ຄູ-ອາຈານ ແລະນັກວິທະຍາສາດ ໂດຍອີງຕາມການສະເໜີ ຂອງຄະນະວິຊາທີ່ກ່ຽວຂ້ອງ ຫຼື ນັກວິທະຍາສາດ ແລະ ໄດ້ຮັບການຮັບຮອງຈາກ ສະພາວິຊາການ ຂອງສະຖາບັນການສຶກສາຊັ້ນສູງນັ້ນ;

(4) ສະຖາບັນການສຶກສາຊັ້ນສູງ ຕ້ອງຮັບປະກັນການສະຫງວນລິຂະສິດໃນການນຳໃຊ້ຕຳລາ ແລະເອກະສານການຮຽນ-ການສອນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະລະບຽບການຂອງສະຖາບັນຕົນເອງ.

3. ພາສາທີ່ນຳໃຊ້ ສຳລັບການຮຽນ-ການສອນ:

ພາສາທີ່ນຳໃຊ້ສຳລັບການຮຽນ-ການສອນ ຢູ່ໃນສະຖາບັນການສຶກສາຊັ້ນສູງ ແມ່ນພາສາລາວ. ສ່ວນພາສາຕ່າງປະເທດແມ່ນສາມາດນຳໃຊ້ສຳລັບການຮຽນ-ການສອນ ສາ ຂາວິຊາພາສາຕ່າງປະເທດ; ນຳໃຊ້ເພື່ອສອນບາງຫຼັກສູດທີ່ເປັນຫຼັກສູດສາກົນ ຫຼືຫຼັກສູດຮ່ວມມືກັບ ສະຖາບັນການສຶກສາ ຂອງຕ່າງປະເທດ ແລະສາມາດນຳໃຊ້ສຳລັບການຄົ້ນຄວ້າວິທະຍາສາດຢູ່ໃນໂຄງການຄົ້ນຄວ້າຕ່າງໆຕາມການອະນຸມັດຂອງ ກະຊວງສຶກສາທິການ ແລະກິລາ ແລະອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງຢູ່ສູນກາງ ແລະທ້ອງຖິ່ນ.

**ມາດຕາ 20 ຮູບແບບການຈັດຕັ້ງການຮຽນ-ການສອນ**

ການຈັດຕັ້ງການຮຽນ-ການສອນຢູ່ສະຖາບັນການສຶກສາຊັ້ນສູງ ສາມາດຈັດຕາມຮູບແບບຕ່າງໆ ດັ່ງນີ້:

(1) ຮູບແບບ ການສຶກສາເຕັມເວລາ (Formal): ຫຼັກສູດປົກກະຕິ, ຫຼັກສູດຕໍ່ເນື່ອງ ຫຼືຫຼັກສູດເຊື່ອມຕໍ່;

(2) ຮູບແບບ ການສຶກສານອກໂຮງຮຽນ (Non-Formal): ການສຶກສາທາງໄກ ຜ່ານສື່ປະເພດຕ່າງໆ ຫຼືຕາມອັດທະຍາໄສ;

(3) ຮູບແບບເປີດ ທີ່ຕິດພັນກັບພາກປະຕິບັດຕົວຈິງ ຢູ່ບັນດາຂະແໜງການເສດຖະກິດ-ສັງຄົມ, ສ້າງເງື່ອນໄຂ ແລະໂອກາດ ໃຫ້ການຮຽນຮູ້ຕະຫຼອດຊີວິດ.

**ມາດຕາ 21 ສິ່ງອຳນວຍຄວາມສະດວກໃຫ້ການຈັດຕັ້ງການຮຽນ-ການສອນ**

ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ ແລະທຸກປະເພດ ຕ້ອງປະກອບສິ່ງອຳນວຍຄວາມສະດວກໃຫ້ການຈັດຕັ້ງການຮຽນ-ການສອນ ເພື່ອບັນລຸຈຸດປະສົງຄາດໝາຍຂອງຫຼັກສູດ ໃຫ້ມີປະສິດທິຜົນ ແລະມີຄຸນນະພາບ; ຮັບປະກັນ ຕາມຫຼັກການ ແລະເງື່ອນໄຂລວມ ທີ່ກຳນົດໄວ້ໃນມາດຕາ 13 ແລະມາດຕາ 16 ຂອງດຳລັດສະບັບນີ້.

**ມາດຕາ 22 ການຄຸ້ມຄອງການຮຽນ-ການສອນ**

ການຄຸ້ມຄອງການຮຽນ-ການສອນ ຂອງສະຖາບັນການສຶກສາຊັ້ນສູງ ໃຫ້ປະຕິບັດ ດັ່ງນີ້:

(1) ຄຸ້ມຄອງຕາມແຜນການຮຽນ-ການສອນ ຂອງແຕ່ລະສົກຮຽນ ຢ່າງຄົບຊຸດ (ມີຕາຕະລາງເວລາປະຈຳວັນ, ປະຈຳອາທິດ ແລະປະຈຳເດືອນ; ແຜນພາກຮຽນ ແລະສົກຮຽນ);

(2) ຄຸ້ມຄອງຕາມການປະຕິບັດ ລະບົບຊົ່ວໂມງ ຂອງຫຼັກສູດ ຕໍ່ສົກຮຽນ (ປີຮຽນ) ຫຼືຕາມລະບົບໜ່ວຍກິດ (ພາກຮຽນ/ອາທິດ/ຊົ່ວໂມງ) ຫຼື ຕາມໝວດປະລິມານຄວາມຮູ້ (ໂມດູນ/Module);

(3) ມີການຈັດຕັ້ງປະກັນຄຸນນະພາບ, ການຈັດຕັ້ງກວດກາ-ປະເມີນຜົນ ການຮຽນ-ການສອນ;

(4) ປະຕິບັດລະບຽບຄຸ້ມຄອງ ຄູ-ນັກສຶກສາ ຂອງສະຖາບັນຢ່າງເຂັ້ມງວດ.

ສະຖາບັນການສຶກສາຊັ້ນສູງ ແຕ່ລະຮູບແບບ ມີລະບຽບການຄຸ້ມຄອງ ການຮຽນ-ການສອນສະເພາະເປັນຂອງຕົນເອງ ທີ່ໄດ້ຜ່ານການຮັບຮອງ ແລະອະນຸມັດນຳໃຊ້ ໂດຍກະຊວງສຶກສາທິການ ແລະກິລາ ແລະການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 23 ການວັດ-ປະເມີນຜົນ ການຮຽນ-ການສອນ**

ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ ແລະທຸກປະເພດ ດຳເນີນການວັດ-ປະເມີນຜົນ ການຮຽນ-ການສອນ ຕາມຫຼັກການລວມ ດັ່ງນີ້:

(1) ວັດ ແລະປະເມີນຜົນ ການຮຽນ-ການສອນ ແບບປົກກະຕິ ໂດຍນຳໃຊ້ວິທີການກວດກາ, ວິທີການສອບເສັງ ເຊັ່ນ: ຈົບວິຊາຮຽນ, ຈົບພາກຮຽນ, ຈົບປີຮຽນ ຫຼືຈົບຫຼັກສູດ ຫຼືດ້ວຍວິທີການຂຽນບົດວິທະຍານິພົນ ຫຼືບົດລາຍງານໂຄງການ... ຕາມທີ່ກຳນົດໄວ້ໃນຫຼັກສູດການສຶກສາຂອງແຕ່ລະລະດັບ.

(2) ນຳໃຊ້ລະບົບເກຣດ (Grade System) ເປັນຫົວໜ່ວຍວັດແທກປະລິມານຄວາມຮູ້ ຫຼື ນຳໃຊ້ລະບົບຄະແນນ ຕາມການກຳນົດໄວ້ ຢູ່ໃນມາດຕະຖານຫຼັກສູດ ການສຶກສາຊັ້ນສູງ ແຫ່ງຊາດ;

(3) ປະຕິບັດຕາມແຜນການວັດ ແລະປະເມີນຜົນການສຶກສາ ຂອງສະຖາບັນຕົນເອງຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ກຳນົດລາຍລະອຽດກ່ຽວກັບຫົວໜ່ວຍວັດແທກປະລິມານຄວາມຮູ້ ເປັນລະບົບເກຣດ ແລະລະບົບຄະແນນ ໃຫ້ເປັນເອກະພາບ.

**ມາດຕາ 24 ປະກາສະນີຍະບັດ**

ການອອກປະກາສະນີຍະບັດ ຂອງສະຖາບັນການສຶກສາຊັ້ນສູງ ໃຫ້ຜູ້ສຳເລັດການສຶກສາ ທຸກລະດັບ ໃຫ້ປະຕິບັດຕາມຫຼັກການ ແລະເງື່ອນໄຂລວມ ດັ່ງນີ້:

1. ຫຼັກການລວມ:
   (1) ຜູ້ຮຽນທີ່ສຳເລັດການສຶກສາຕາມຫຼັກສູດທຸກລະດັບ ມີສິດໄດ້ຮັບປະກາສະນີຍະບັດຂອງສະຖາບັນທີ່ດຳເນີນການຮຽນ-ການສອນຫຼັກສູດນັ້ນ;
   (2) ອະທິການບໍດີ, ຫົວໜ້າສະຖາບັນ, ຜູ້ອຳນວຍການ ຫຼືຜູ້ຖືກມອບສິດ ມີສິດເຊັນອອກ ແລະມອບປະກາສະນີຍະບັດ ໃຫ້ຜູ້ສຳເລັດການສຶກສາ ຈາກສະຖາບັນຂອງຕົນ ຢ່າງຖືກຕ້ອງ, ເປັນທຳ ແລະໂປ່ງໃສ.
2. ເງື່ອນໄຂລວມ:
   (1) ຜູ້ຮຽນທີ່ຈະໄດ້ປະກາສະນີຍະບັດ ຕ້ອງສຳເລັດການສຶກສາຕາມຫຼັກສູດ ຢ່າງສົມບູນ, ມີຜົນການຮຽນ ແລະການສອບເສັງ ຫຼືການປ້ອງກັນບົດວິທະຍານິພົນ ໄດ້ຕາມຄາດໝາຍ ແລະມີຄຸນສົມບັດດີ;
   (2) ບັນຊີລາຍຊື່ຜູ້ສຳເລັດການສຶກສາຊັ້ນສູງ ທີ່ມີສິດໄດ້ຮັບປະກາສະນີຍະບັດ ຕ້ອງໄດ້ຜ່ານການຮັບຮອງ, ຂຶ້ນທະບຽນລວມ ຢູ່ກະຊວງສຶກສາທິການ ແລະກິລາ ແລະອົງການຈັດຕັ້ງຂະແໜງການ ທີ່ກ່ຽວຂ້ອງ.
3. ຮູບແບບຂອງປະກາສະນີຍະບັດ:
   (1) ສະຖາບັນການສຶກສາຊັ້ນສູງທຸກລະດັບ ສາມາດອອກແບບປະກາສະນີຍະບັດ ທີ່ມີເອກະ ລັກສະເພາະເປັນຂອງຕົນເອງໄດ້ (ແບບຫຼອງປົກ ແລະໃບເຈັ້ຍຊຸນເນື້ອໃນ) ໂດຍມີເຄື່ອງໝາຍ ຫຼື ລະຫັດລັບສະເພາະ ເພື່ອເປັນຂໍ້ມູນຫຼັກຖານພິສູດຢັ້ງຢືນ ໃນກໍລະນີທີ່ມີການປອມແປງ.
   (2) ກະຊວງສຶກສາທິການ ແລະກິລາ ກຳນົດຮູບແບບລວມດ້ານເນື້ອໃນ ປະກາສະນີຍະບັດ ຂອງຫຼັກສູດການສຶກສາຊັ້ນສູງ ທຸກລະດັບ.
4. ປະກາສະນີຍະບັດ ປະລິນຍາເອກ ກິດຕິມະສັກ:

   ສະຖາບັນການສຶກສາຊັ້ນສູງ ທີ່ມີຖານະ ມະຫາວິທະຍາໄລ ຫຼືທຽບເທົ່າ ທຸກຮູບແບບສາມາດອອກປະກາສະນີຍະບັດ ປະລິນຍາເອກກິດຕິມະສັກ (Honorary Doctor) ມອບເປັນ

ກຽດໃຫ້ບຸກຄົນພາຍນອກຕາມເງື່ອນໄຂທີ່ສະຖາບັນກຳນົດ ໂດຍຜ່ານການຮັບຮອງ ຂອງສະພາສະຖາບັນນັ້ນ ແລະການເຫັນດີ ຂອງອົງການຈັດຕັ້ງຂະແໜງການທີ່ກ່ຽວຂ້ອງ.

ມອບໃຫ້ສະຖາບັນການສຶກສາຊັ້ນສູງທີ່ກ່ຽວຂ້ອງ ກຳນົດລະບຽບຫຼັກການ, ເງື່ອນໄຂ ແລະມາດຕະຖານ ເພື່ອການໃຫ້ປະກາສະນີຍະບັດປະລິນຍາເອກກິດຕິມະສັກ.

5. ການຖອນ, ການລົບລ້າງ, ການປອມແປງ ແລະການຊື້-ຂາຍ ປະກາສະນີຍະບັດ:

(1) ບຸກຄົນໃດທີ່ມີພຶດຕິກຳ ຫຼືກະທຳຜິດ ຕໍ່ສະຖາບັນການສຶກສາຊັ້ນສູງ, ຜິດຕໍ່ຈັນຍາບັນວິຊາຊີບ ຫຼືຜິດຕໍ່ກົດໝາຍ ແລະລະບຽບການ ກ່ຽວກັບວິຊາການ ທີ່ຂຽນໄວ້ໃນປະກາສະນີຍະບັດ, ຈະຖືກດຳເນີນຄະດີຕາມກົດໝາຍ ແລະລະບຽບການ ຕາມສະຖານເບົາ ຫຼືໜັກ ເຊັ່ນ ຈະຖືກໂຈະ ຫຼືຖອນ ຫຼືລົບລ້າງ ປະກາສະນີຍະບັດທີ່ຜູ້ກ່ຽວມີສິດໄດ້ຮັບ.

(2) ຜູ້ໃດປອມແປງ ແລະຊື້-ຂາຍ ປະກາສະນີຍະບັດການສຶກສາຊັ້ນສູງ ທຸກລະດັບ ຈາກພາຍໃນ ຫຼືຕ່າງປະເທດ ຈະໄດ້ຮັບໂທດຕາມກົດໝາຍ ຕາມສະຖານເບົາ ຫຼືໜັກ.

## ໝວດທີ 4
## ການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ ແລະການບໍລິການວິຊາການ

**ມາດຕາ 25 ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ**

1. ເປົ້າໝາຍ

- ສົ່ງເສີມໃຫ້ມີການຈັດຕັ້ງ ການຄົ້ນຄວ້າວິທະຍາສາດ ແລະເຕັກໂນໂລຊີ ເພື່ອຍົກສູງຄວາມສາມາດຂອງບຸກຄະລາກອນ, ຄູ, ນັກສຶກສາ ແລະນັກຄົ້ນຄວ້າວິທະຍາສາດ ຢູ່ສະຖາບັນການສຶກສາຊັ້ນສູງ;
- ສົ່ງເສີມຫົວຄິດປະດິດສ້າງຂອງຄູ, ນັກສຶກສາ, ນັກຄົ້ນຄວ້າວິທະຍາສາດ ແລະນັກປະດິດຄິດແຕ່ງ ເພື່ອປະກອບສ່ວນພັດທະນາເສດຖະກິດ-ສັງຄົມ ແລະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງຊາດ.

2. ເນື້ອໃນການຄົ້ນຄວ້າວິທະຍາສາດ ແລະເຕັກໂນໂລຊີ

- ຄົ້ນຄວ້າວິທະຍາສາດພື້ນຖານ ທຳມະຊາດ, ສັງຄົມ, ວິທະຍາສາດນຳໃຊ້ ແລະການຖ່າຍທອດເຕັກໂນໂລຊີ ເພື່ອຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ ເຊັ່ນ ອຸດສາຫະກຳ, ກະສິກຳ-ປ່າໄມ້, ສິ່ງແວດລ້ອມ, ການບໍລິການ, ເສດຖະກິດ, ການເມືອງ-ການປົກຄອງ, ການສຶກສາ, ການກິລາ, ສາທາລະນະສຸກ, ສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະອື່ນໆ.
- ຄົ້ນຄວ້າ, ສົ່ງເສີມ, ຂະຫຍາຍພູມປັນຍາ ຂອງປະຊາຊົນບັນດາເຜົ່າ ແລະຜົນການຄົ້ນວິທະຍາສາດ ເພື່ອໃຫ້ກາຍເປັນຊັບສິນທາງປັນຍາຂອງຊາດ, ທ້ອງຖິ່ນ, ຊຸມຊົນ ແລະບຸກຄົນ.

3. ໜ້າທີ່ ແລະຂອບເຂດສິດ ໃນການຄົ້ນຄວ້າວິທະຍາສາດ ແລະເຕັກໂນໂລຊີ ຂອງສະຖາບັນການສຶກສາຊັ້ນສູງ:

- ສ້າງແຜນຍຸດທະສາດ ແລະໂຄງການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ ໄລຍະສັ້ນ, ໄລຍະຍາວ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ທ້ອງຖິ່ນ;
- ເປັນເຈົ້າການຈັດຕັ້ງ ແລະດຳເນີນການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ ຕາມພາລະບົດບາດ ແລະຂອບເຂດຄວາມຮັບຜິດຊອບຂອງຕົນ.
- ສ້າງ ແລະຂະຫຍາຍ ສະຖານທີ່ການຄົ້ນຄວ້າວິທະຍາສາດ ໃຫ້ມີຄວາມພ້ອມ ເຊັ່ນ ຫ້ອງທົດລອງ, ສູນທົດລອງ, ສະຖານີທົດລອງ, ຫ້ອງສະໝຸດ, ອຸປະກອນເຕັກນິກ, ແລະສິ່ງອຳນວຍຄວາມສະດວກອື່ນໆ.
- ເປັນເຈົ້າການ ແລະມີສ່ວນຮ່ວມ ໃນການຄົ້ນຄວ້າ ແລະຄັດເລືອກຫົວຂໍ້ຄົ້ນຄວ້າວິທະຍາສາດ, ການໃຫ້ຄຳປຶກສາ, ການປະຕິບັດສັນຍາຮ່ວມມືການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ຈັດຕັ້ງດຳເນີນການຄົ້ນຄວ້າຕາມຫົວຂໍ້ວິທະຍາສາດ ຕາມຄວາມຕ້ອງການຈຳເປັນ ແລະເປັນບູລິມະສິດ;
- ຮັບປະກັນ ແລະປົກປ້ອງ-ຄຸ້ມຄອງລິຂະສິດ, ຜົນປະໂຫຍດທາງວິທະຍາສາດ-ເຕັກໂນໂລຊີ ແລະຊັບສິນທາງປັນຍາຂອງສະຖາບັນ;
- ຄົ້ນຄວ້າຊອກຫາແຫຼ່ງທຶນ ແລະນຳໃຊ້ ເຂົ້າໃນການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ ຢ່າງມີປະສິດທິຜົນສູງ ເພື່ອຜົນປະໂຫຍດລວມຂອງຊາດ.

4. ຄວາມຮັບຜິດຊອບຂອງລັດ ຕໍ່ການຄົ້ນຄວ້າວິທະຍາສາດ ແລະເຕັກໂນໂລຊີ
   - ລັດຖະບານກຳນົດຍຸດທະສາດລວມ ແລະແຜນການລົງທຶນແຕ່ລະໄລຍະ ເພື່ອການຄົ້ນຄວ້າວິທະຍາສາດ ແລະເຕັກໂນໂລຊີ;
   - ກະຊວງສຶກສາທິການ ແລະກິລາ ສົມທົບກັບກະຊວງວິທະຍາສາດ-ເຕັກໂນໂລຊີ ແລະຂະແໜງການທີ່ກ່ຽວຂ້ອງ ສ້າງລະບຽບ, ຫຼັກການ ແລະແຜນການທີ່ເປັນບູລິມະສິດໃນຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ ຂອງສະຖາບັນການສຶກສາຊັ້ນສູງ.

5. ແຫຼ່ງທຶນໃນການຄົ້ນຄວ້າວິທະຍາສາດ ແລະເຕັກໂນໂລຊີ

   ສະຖາບັນການສຶກສາຊັ້ນສູງທີ່ມີຄວາມພ້ອມ ໃນການດຳເນີນການຄົ້ນຄວ້າວິທະຍາສາດ ແລະເຕັກໂນໂລຊີ ສາມາດໄດ້ມາຈາກແຫຼ່ງທຶນຕ່າງໆ ເຊັ່ນ ງົບປະມານຂອງລັດຕາມແຜນບູລິມະສິດ (ລະດັບຊາດ, ລະດັບທ້ອງຖິ່ນ ແລະລະດັບສະຖາບັນ); ກອງທຶນ; ໂຄງການຕ່າງໆ; ການສະໜັບສະໜູນຈາກການຈັດຕັ້ງພາຍໃນ ຫຼື ຕ່າງປະເທດ, ຈາກການຈັດຕັ້ງສາກົນ, ການບໍລິຈາກຂອງບຸກຄົນ ຫຼືລວມໝູ່.

6. ການຄຸ້ມຄອງການຄົ້ນຄວ້າວິທະຍາສາດ ແລະເຕັກໂນໂລຊີ:

   ສະຖາບັນການສຶກສາຊັ້ນສູງແຕ່ລະແຫ່ງ ມີໜ້າທີ່ ແລະຄວາມຮັບຜິດຊອບ ໃນການຄຸ້ມຄອງການຄົ້ນຄວ້າວິທະຍາສາດ ແລະເຕັກໂນໂລຊີ ດ້ວຍຕົນເອງຕາມພາລະບົດບາດ ແລະຂອບເຂດສິດ ໂດຍໃຫ້ມີກົນໄກການຈັດຕັ້ງ ແລະລະບຽບການ ໃນການຕິດຕາມ, ກວດກາ ແລະປະເມີນຜົນ ທີ່ມີປະສິດທິພາບໂດຍໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍວິທະຍາສາດ ແລະເຕັກໂນໂລຊີ ແລະກົດໝາຍອື່ນທີ່ກ່ຽວຂ້ອງ.

ມາດຕາ 26 ການບໍລິການວິຊາການ

ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ, ທຸກປະເພດ ແລະທຸກລະດັບ ມີໜ້າທີ່ໃຫ້ການບໍລິການວິຊາການ ແກ່ສັງຄົມ ດ້ວຍຮູບການ ແລະວິທີການຕ່າງໆ ຕາມຂອບເຂດສິດ ແລະພາລະບົດບາດ; ມີສິດໄດ້ຮັບຄ່າຕອບແທນຈາກການບໍລິການວິຊາການ ແລະມີສິດຄຸ້ມຄອງ-ນຳໃຊ້ ລາຍຮັບວິຊາການ ຕາມກົດໝາຍ ແລະລະບຽບການ.

## ໝວດທີ 5
## ການປະກັນຄຸນນະພາບ

ມາດຕາ 27 ການຈັດຕັ້ງປະກັນຄຸນນະພາບ

ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ, ທຸກປະເພດ ຕ້ອງມີກົງຈັກການຈັດຕັ້ງ ແລະເຄືອຂ່າຍການປະກັນຄຸນນະພາບພາຍໃນຂອງຕົນເອງ ຊຶ່ງເປັນການຈັດຕັ້ງ ທີ່ມີຄວາມເປັນເອກະລາດທາງດ້ານວິຊາການ ຢູ່ພາຍໃຕ້ການຊີ້ນຳໂດຍກົງ ຂອງຄະນະຜູ້ບໍລິຫານ ສະຖາບັນການສຶກສາຊັ້ນສູງນັ້ນ ເພື່ອຮັບຜິດຊອບ ກ່ຽວກັບການປະກັນຄຸນນະພາບການສຶກສາ ພາຍໃນສະຖາບັນ.

ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ, ທຸກປະເພດ ໃຫ້ປະຕິບັດຕາມເງື່ອນໄຂ ແລະມາດຕະຖານປະກັນຄຸນນະພາບການສຶກສາຊັ້ນສູງ ຂອງກະຊວງສຶກສາທິການ ແລະກິລາ ກຳນົດໄວ້.

ມາດຕາ 28 ຄວາມຮັບຜິດຊອບຂອງສະຖາບັນການສຶກສາຊັ້ນສູງ ກ່ຽວກັບ ການປະກັນຄຸນນະພາບ

ສະຖາບັນການສຶກສາຊັ້ນສູງ ມີໜ້າທີ່ຮັບຜິດຊອບ ດັ່ງນີ້:

1. ສ້າງລະບົບການປະກັນຄຸນນະພາບພາຍໃນ, ດຳເນີນການກວດສອບ ແລະປະເມີນຄຸນນະພາບດ້ວຍຕົນເອງຕາມມາດຕະຖານ ທີ່ກະຊວງສຶກສາທິການ ແລະກິລາກຳນົດ;
2. ສ້າງເອກະສານຂໍ້ມູນ ແລະບົດລາຍງານການປະກັນຄຸນນະພາບ ເພື່ອລາຍງານຕໍ່ອົງການຈັດຕັ້ງຂອງລັດ ໃນຂະແໜງການທີ່ກ່ຽວຂ້ອງ ຕາມການສະເໜີ;
3. ຮັບຜິດຊອບ ແລະຍອມຮັບ ການກວດສອບ ແລະການປະເມີນຕີລາຄາຂອງອົງກອນປະກັນຄຸນນະພາບພາຍນອກ ຕໍ່ສະຖາບັນການສຶກສາຊັ້ນສູງນັ້ນ;
4. ວາງແຜນ, ກຳນົດໄລຍະເວລາ ແລະລົງທະບຽນເພື່ອດຳເນີນຂັ້ນຕອນການປະກັນຄຸນນະພາບພາຍໃນສະຖາບັນສຶກສາຊັ້ນສູງ;
5. ເຜີຍແຜ່ ແລະເປີດເຜີຍ ຂໍ້ມູນກ່ຽວກັບຜົນການກວດກາ ຕີລາຄາປະເມີນການປະກັນຄຸນນະພາບຕາມເງື່ອນໄຂ ແລະມາດຕະຖານ ທີ່ກະຊວງສຶກສາທິການ ແລະກິລາກຳນົດ ຕໍ່ສັງຄົມໂດຍຜ່ານສື່ມວນຊົນປະເພດຕ່າງໆ;
6. ນຳໃຊ້ ແລະຜັນຂະຫຍາຍຜົນຂອງການປະເມີນຕີລາຄາການປະກັນຄຸນນະພາບ;
7. ຮ້ອງຟ້ອງ ຫຼືດຳເນີນການຢ່າງໃດຢ່າງໜຶ່ງຕໍ່ການຈັດຕັ້ງລັດ, ບຸກຄົນ ຫຼືລວມໝູ່ ທີ່ໃສ່ຮ້າຍປ້າຍສີ ຫຼືວິພາກວິຈານ, ບິດເບືອນຄວາມຈິງກ່ຽວກັບການປະກັນຄຸນນະພາບ ໃນສະຖາບັນການສຶກສາຊັ້ນສູງຂອງຕົນ.

ມາດຕາ 29 ຫຼັກການ, ເນື້ອໃນ ແລະ ວິທີການປະກັນຄຸນນະພາບ

ຫຼັກການ, ເນື້ອໃນ ແລະວິທີການປະກັນຄຸນນະພາບ ຂອງ ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ, ທຸກປະເພດ ໃຫ້ປະຕິບັດຕາມເງື່ອນໄຂ ແລະມາດຕະຖານກ່ຽວກັບການປະກັນຄຸນນະພາບ ການສຶກສາຊັ້ນສູງ ທີ່ກະຊວງສຶກສາທິການ ແລະກິລາ ກຳນົດ.

## ໝວດທີ 6

## ຄູ ແລະບຸກຄະລາກອນ ສະຖາບັນການສຶກສາຊັ້ນສູງ

ມາດຕາ 30 ຄູ

ຄູ ແມ່ນບຸກຄົນ ທີ່ປະຕິບັດໜ້າທີ່ສິດສອນ ຖ່າຍທອດຄວາມຮູ້ໃຫ້ຜູ້ຮຽນ ດ້ວຍວິທີການສິດສອນຮູບແບບຕ່າງໆ, ເປັນຜູ້ທີ່ມີທາດແທ້ຄຸນສົມບັດດີ, ມີສຸຂະພາບແຂງແຮງ, ມີຄວາມເໝາະສົມຕາມເງື່ອນໄຂຂອງອາຊີບ, ມີລະດັບວິຊາສະເພາະ ແລະວຸດທິການສຶກສາ ຖືກຕາມເງື່ອນໄຂ, ມາດຕະຖານຫຼັກສູດ ແລະມາດຕະຖານອາຊີບຂອງສະຖາບັນນັ້ນກຳນົດ;

ມອບໃຫ້ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ກຳນົດມາດຕະຖານ ແລະເງື່ອນໄຂລະອຽດ ທາງດ້ານຄຸນສົມບັດ, ວຸດທິການສຶກສາ, ວິຊາຊີບ, ສຸຂະພາບ ແລະເງື່ອນໄຂພິເສດອື່ນໆ ຂອງຄູ ຢູ່ສະຖາບັນການສຶກສາຊັ້ນສູງ ລະດັບຕ່າງໆ.

ມາດຕາ 31 **ຄູປະຈຳ ແລະຄູຮັບເຊີນ**

ກ. ຄູປະຈຳ: ແມ່ນລັດຖະກອນຄູ ທີ່ປະຕິບັດໜ້າທີ່ສິດສອນປະຈຳ ຢູ່ສະຖາບັນການສຶກສາຊັ້ນສູງນັ້ນໆ; ຈຳນວນຄູປະຈຳ ໂດຍທົ່ວໄປໃຫ້ມີ ດັ່ງນີ້:

(1) ສະຖາບັນການສຶກສາຊັ້ນສູງຂອງລັດ ທຸກປະເພດ: ຈຳນວນຄູປະຈຳ ໃຫ້ມີອັດຕາສ່ວນຕ່ຳສຸດເທົ່າກັບສອງສ່ວນສາມ (2/3) ຂອງ ຄູທັງໝົດຢູ່ສະຖາບັນການສຶກສານັ້ນ;

(2) ສະຖາບັນການສຶກສາຊັ້ນສູງທີ່ສ້າງຕັ້ງຕາມຮູບແບບ 3 ແລະ 4 ຕາມມາດຕາ 11 ຂອງດຳລັດສະບັບນີ້ ແລະທຸກປະເພດ ຕາມມາດຕາ 12 ຂອງດຳລັດສະບັບນີ້: ຈຳນວນຄູປະຈຳ ໃຫ້ມີອັດຕາສ່ວນຕ່ຳສຸດເທົ່າກັບໜຶ່ງສ່ວນສອງ (1/2) ຂອງຄູທັງໝົດຢູ່ສະຖາບັນການສຶກສານັ້ນ;

ຂ. ຄູຮັບເຊີນ: ແມ່ນບຸກຄົນທີ່ຖືກຮັບເຊີນຈາກພາຍນອກ (ບໍ່ສັງກັດສະຖາບັນ) ເພື່ອມາສິດສອນ-ຖ່າຍທອດຄວາມຮູ້ ໃຫ້ນັກສຶກສາ ດ້ວຍວິທີການສິດສອນຕາມຮູບແບບຕ່າງໆ ທີ່ສະຖາບັນການສຶກສານັ້ນ ກຳນົດໄວ້ໃນຫຼັກສູດ. ຄູຮັບເຊີນດັ່ງກ່າວ ເປັນຜູ້ທີ່ມີຄວາມຮູ້-ຄວາມສາມາດ, ມີປະສົບການ ແລະມີບົດຮຽນ ທາງດ້ານສາຂາວິຊາສະເພາະທີ່ກ່ຽວຂ້ອງ. ບຸກຄົນພາຍນອກເຫຼົ່ານັ້ນ ອາດຈະເປັນນັກວິທະຍາສາດ, ນັກທຸລະກິດ, ນັກການເມືອງ-ການປົກຄອງ ຫຼືນັກວິຊາການ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະອື່ນໆ ຊຶ່ງອາດຈະແມ່ນຄົນລາວ ຫຼືຄົນຕ່າງປະເທດ ໂດຍອີງຕາມຄວາມຕ້ອງການຂອງສະຖາບັນການສຶກສາຊັ້ນສູງນັ້ນ ແລະຕາມການອະນຸຍາດຂອງ ອົງການຈັດຕັ້ງທີ່ກ່ຽວຂ້ອງ.

ມາດຕາ 32 ຕຳແໜ່ງວິຊາການ ແລະ ນາມມະຍົດ ຂອງຄູ

ຄູ ຢູ່ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ, ທຸກລະດັບ ແລະ ທຸກປະເພດ ມີສິດສະເໜີຂໍຕຳແໜ່ງວິຊາການ ແລະນາມມະຍົດຄູ ຕາມເງື່ອນໄຂ ແລະລະບຽບການ ທີ່ກ່ຽວຂ້ອງ, ໂດຍທົ່ວໄປຈະໄດ້ຮັບການແຕ່ງຕັ້ງ ດັ່ງນີ້:

ກ. ຕຳແໜ່ງວິຊາການ ຄູປະຈຳ:

(1) ສາດສະດາຈານ (ຂຽນຫຍໍ້: ສຈ.) ແລະ ຮອງສາດສະດາຈານ (ຂຽນຫຍໍ້: ຮສ.), ແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີວ່າການກະຊວງ ສຶກສາທິການ ແລະກິລາ, ຜ່ານການຮັບຮອງຈາກສະພາການສຶກສາຊັ້ນສູງແຫ່ງຊາດ;

(2) ອາຈານ (ຂຽນຫຍໍ້: ອຈ.) ແລະ ຜູ້ຊ່ວຍອາຈານ (ຂຽນຫຍໍ້: ຊອ.), ແຕ່ງຕັ້ງໂດຍລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ຕາມການສະເໜີ ຂອງສະພາມະຫາວິທະຍາໄລ ຫຼືສະພາສະຖາບັນການສຶກສາຊັ້ນສູງທີ່ກ່ຽວຂ້ອງ.

ຕຳແໜ່ງວິຊາການຄູ ຂັ້ນສາດສະດາຈານ, ຮອງສາດສະດາຈານ, ອາຈານ ແລະ ຜູ້ຊ່ວຍອາຈານ ມີສິດໄດ້ຮັບນະໂຍບາຍ ເງິນອຸດໜູນຕຳແໜ່ງ ຕາມການກຳນົດຂອງລັດຖະບານ.

ຂ. ຕຳແໜ່ງວິຊາການ ຂອງຄູທີ່ເປັນບຸກຄົນພາຍນອກ (ບໍ່ປະຈຳ):

ຄູ ທີ່ເປັນບຸກຄົນພາຍນອກສະຖາບັນ (ບໍ່ປະຈຳ) ຊຶ່ງບຸກຄົນນັ້ນ ໄດ້ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ສິດສອນ ຢູ່ສະຖາບັນການສຶກສາຊັ້ນສູງໃດໜຶ່ງ ຫຼືຫຼາຍສະຖາບັນການສຶກສາມາກ່ອນ, ມີຜົນງານ ໃນການຄົ້ນຄວ້າ ຂຽນ, ຮຽບຮຽງ, ແປເອກະ ສານ, ຕຳລາ ຮັບໃຊ້ການຮຽນ-ການສອນ ແລະມີຜົນງານທາງດ້ານວິທະຍາສາດຕ່າງໆ ໃນການປະກອບສ່ວນເຂົ້າໃນການພັດທະນາການສຶກສາ ກໍ່ຄືການພັດທະນາເສດຖະກິດ-ສັງຄົມ, ມີສິດສະເໜີຂໍຕຳແໜ່ງວິຊາການຄູແບບພິເສດ ຕາມເງື່ອນໄຂ ແລະຜົນງານຕົວຈິງ ດັ່ງນີ້:

(1) ສາດສະດາຈານກຽດຕິຄຸນ (Emeritus Professor): ແມ່ນຕຳແໜ່ງກຽດຕິຄຸນທີ່ໄດ້ຮັບການແຕ່ງຕັ້ງ ແລະມອບໃຫ້ສະເພາະບຸກຄົນທີ່ເຄີຍໄດ້ຮັບຕຳແໜ່ງ ເປັນສາດສະດາຈານ ຫຼືຮອງສາດສະດາຈານມາກ່ອນແລ້ວ, ເປັນຜູ້ມີຜົນງານ-ຄຸນງາມຄວາມດີ ໃນອາຊີບຄູຢ່າງຫຼວງຫຼາຍ ຊຶ່ງບຸກຄົນນັ້ນໄດ້ພັກຜ່ອນບຳນານ, ເປັນຜູ້ອາວຸໂສ ຫຼືເປັນຜູ້ຊົງຄຸນວຸດທິ ແລະອື່ນໆ.

ສາດສະດາຈານກຽດຕິຄຸນ ແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ, ຜ່ານການຮັບຮອງຈາກສະພາການສຶກສາຊັ້ນສູງແຫ່ງຊາດ; ຜູ້ໄດ້ຮັບການແຕ່ງຕັ້ງມີສິດ ຍຶດຖືໄວ້ "ຕະຫຼອດກາລະນານ".

(2) ສາດສະດາຈານກິດຕິມະສັກ (Honorary Professor): ແມ່ນຕຳແໜ່ງວິຊາການຄູປະເພດໜຶ່ງ, ແຕ່ງຕັ້ງເພື່ອມອບເປັນກຽດ ຍົກຍ້ອງຖານະ ໃຫ້ເປັນກິດຕິມະສັກ ສຳລັບບຸກຄົນ ທີ່ມີຜົນງານດີເດັ່ນຕໍ່ສະຖາບັນໃດໜຶ່ງ ຊຶ່ງແຕ່ງຕັ້ງໂດຍອະທິການບໍດີມະຫາວິທະຍາໄລ ຫຼືຫົວໜ້າສະຖາບັນ ທີ່ກ່ຽວຂ້ອງ, ຜ່ານການຮັບຮອງ ຂອງສະພາມະຫາວິທະຍາໄລ ຫຼືສະພາສະຖາບັນນັ້ນ;

(3) ສາດສະດາຈານພິເສດ (Adjunct Professor): ແມ່ນຕຳແໜ່ງວິຊາການຄູປະເພດໜຶ່ງ, ແຕ່ງຕັ້ງ ແລະມອບໃຫ້ເປັນພິເສດ ສຳລັບບຸກຄົນໃດໜຶ່ງທີ່ເປັນຄູຮັບເຊີນ (ບໍ່ປະຈຳ) ຊຶ່ງເປັນຜູ້ຊ່ຽວຊານສະເພາະດ້ານ ຫຼືເປັນນັກປາຖະກະຖາພິເສດ ຂອງສະຖາບັນການສຶກສາຊັ້ນສູງ ທີ່ມີຖານະມະຫາວິທະຍາໄລ ແຫ່ງໃດໜຶ່ງ ຊຶ່ງແຕ່ງຕັ້ງໂດຍອະທິການບໍດີມະຫາວິທະຍາໄລ ຫຼືຫົວໜ້າສະຖາບັນທີ່ກ່ຽວຂ້ອງ, ຜ່ານການຮັບຮອງ ຂອງ ສະພາມະຫາວິທະຍາໄລ ຫຼືສະພາສະຖາບັນນັ້ນ.

ຕຳແໜ່ງວິຊາການ ຂັ້ນ ສາດສະດາຈານກຽດຕິຄຸນ, ສາດສະດາຈານກິດຕິມະສັກ ແລະສາດສະດາຈານພິເສດ ໂດຍທົ່ວໄປ ບໍ່ມີນະໂຍບາຍເງິນອຸດໜູນຕຳແໜ່ງ.

ມອບໃຫ້ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ກຳນົດ ມາດຕະຖານ, ເງື່ອນໄຂ ແລະວິທີການ ໃນການພິຈາລະນາການແຕ່ງຕັ້ງ, ການປົດ ຫຼືການຖອນຕຳ ແໜ່ງວິຊາການຂອງຄູ ທຸກປະເພດ.

ຄ. ນາມມະຍົດຂອງຄູ: ຄູ ຢູ່ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ, ທຸກປະເພດ ແລະທຸກລະດັບມີສິດສະເໜີ ຂໍນາມມະຍົດຄູປະເພດຕ່າງໆ ຕາມດຳລັດຂອງລັດຖະບານ ວ່າດ້ວຍລັດຖະກອນຄູ.

### ມາດຕາ 33 ໜ້າທີ່ ແລະຂອບເຂດສິດຂອງ ຄູ

ຄູ ໃນສະຖາບັນການສຶກສາຊັ້ນສູງ ຕ້ອງປະຕິບັດຕາມໜ້າທີ່ ແລະຂອບເຂດສິດ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາ ແລະດຳລັດວ່າດ້ວຍລັດຖະກອນຄູ ສະບັບເລກທີ 177/ລບ, ລົງວັນທີ 05 ເມສາ 2012.

### ມາດຕາ 34 ນະໂຍບາຍຕໍ່ຄູ

ຄູ ຢູ່ສະຖາບັນການສຶກສາຊັ້ນສູງ ມີສິດໄດ້ຮັບນະໂຍບາຍດ້ານຕ່າງໆ ຕາມລະບຽບກົດໝາຍຂອງລັດ ແລະຕາມລະບຽບການສະເພາະ ຂອງແຕ່ລະສະຖາບັນການສຶກສາຊັ້ນສູງກຳນົດ.

### ມາດຕາ 35 ການພັດທະນາຄູ

ສະຖາບັນການສຶກສາຊັ້ນສູງທຸກລະດັບ ຕ້ອງມີແຜນພັດທະນາຄູ ຂອງຕົນເອງ ເພື່ອຍົກລະດັບຄວາມຮູ້ຄວາມສາມາດດ້ານວິຊາການ, ວິຊາຄູ, ຂໍ້ມູນຂ່າວສານ, ພາສາຕ່າງປະເທດ, ທິດສະດີການເມືອງ ແລະອື່ນໆໃຫ້ສູງຂຶ້ນຢ່າງຕໍ່ເນື່ອງ, ສາມາດປະຕິບັດໜ້າທີ່ການສອນ, ການຄົ້ນຄວ້າວິທະຍາສາດ, ການບໍລິການວິຊາການ, ການເຊື່ອມໂຍງກັບພາກພື້ນ ແລະສາກົນ ຢ່າງມີປະສິດທິພາບ.

### ມາດຕາ 36 ບຸກຄະລາກອນ

ບຸກຄະລາກອນ ທີ່ປະຕິບັດໜ້າທີ່ ຢູ່ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ ແລະທຸກປະເພດ ຕ້ອງມີຄວາມເໝາະສົມ ທາງດ້ານຈຳນວນ, ມີວິຊາສະເພາະຖືກຕາມສາຂາອາຊີບ, ມີລະດັບຄວາມຮູ້ຄວາມສາມາດ ແລະຄຸນສົມບັດ ຖືກຕາມເງື່ອນໄຂ, ມາດຕະຖານ ຕຳແໜ່ງງານຂອງສະຖາບັນການສຶກ

ສານັ້ນ ກຳນົດ. ສະເພາະບຸກຄະລາກອນ ຂອງສະຖາບັນການສຶກສາຊັ້ນສູງ ຂອງລັດ ຕ້ອງໄດ້ດຳເນີນ ການບັນຈຸ, ສັບຊ້ອນ, ຄັດເລືອກ ໃຫ້ຖືກຕ້ອງກັບລະບຽບກົດໝາຍວ່າດ້ວຍລັດຖະກອນຂອງ ສປປ ລາວ.

## ໝວດທີ 7
## ການຄຸ້ມຄອງນັກສຶກສາ

**ມາດຕາ 37 ການຈັດຕັ້ງ ແລະການຄຸ້ມຄອງ**

ສະຖາບັນການສຶກສາຊັ້ນສູງແຕ່ລະແຫ່ງ ຕ້ອງມີການຈັດຕັ້ງຄຸ້ມຄອງນັກສຶກສາຢ່າງເປັນລະບົບ ຄົບຊຸດ ເພື່ອປະຕິບັດໜ້າທີ່ຄຸ້ມຄອງ, ດູແລນັກສຶກສາ ຕາມລະບຽບວິໄນ ຂອງສະຖາບັນ ແລະກົດໝາຍ ຂອງລັດ ກ່ຽວກັບການເຄື່ອນໄຫວ ໃນຊີວິດປະຈຳວັນ, ການເຄື່ອນໄຫວຢູ່ໃນຫ້ອງຮຽນ, ຢູ່ຫໍພັກ, ການເຄື່ອນໄຫວນອກຫຼັກສູດ, ການຈັດກິດຈະກຳທາງດ້ານກິລາກາຍະກຳ, ວັດທະນະທຳ, ສັງຄົມ, ການເມືອງ ແລະການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ຢູ່ສະຖາບັນການສຶກສານັ້ນ.

**ມາດຕາ 38 ສິດ, ໜ້າທີ່ ແລະພັນທະຂອງນັກສຶກສາ**

ນັກສຶກສາຢູ່ສະຖາບັນການສຶກສາຊັ້ນສູງ ມີສິດ, ໜ້າທີ່ ແລະພັນທະ ຕາມກົດໝາຍວ່າດ້ວຍການ ສຶກສາ ແລະປະຕິບັດຕາມກົດລະບຽບວ່າດ້ວຍການຄຸ້ມຄອງນັກສຶກສາຢູ່ພາຍໃນປະເທດ ຂອງ ກະຊວງ ສຶກສາທິການ ແລະກິລາ.

**ມາດຕາ 39 ນະໂຍບາຍຕໍ່ນັກສຶກສາ**

ນັກສຶກສາ ທີ່ກຳລັງສຶກສາຢູ່ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ ແລະທຸກລະດັບ ມີສິດໄດ້ ຮັບນະໂຍບາຍດ້ານຕ່າງໆ ຕາມກົດໝາຍວ່າດ້ວຍການສຶກສາ, ລະບຽບການຂອງກະຊວງສຶກສາທິການ ແລະກິລາ ແລະສະຖາບັນການສຶກສາຊັ້ນສູງວາງອອກ.

## ໝວດທີ 8
## ການລົງທຶນພັດທະນາການສຶກສາຊັ້ນສູງ

**ມາດຕາ 40 ນະໂຍບາຍລວມ**

ລັດສົ່ງເສີມການລົງທຶນພັດທະນາສະຖາບັນການສຶກສາຊັ້ນສູງທຸກລະດັບ, ທຸກຮູບແບບ ແລະທຸກ ປະເພດ ຕາມທີ່ກຳນົດໄວ້ ໃນມາດຕາ 10, 11 ແລະ 12 ຂອງດຳລັດສະບັບນີ້ ໂດຍອີງຕາມແຜນ ພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

**ມາດຕາ 41 ການລົງທຶນຂອງລັດ**

ລັດລົງທຶນພັດທະນາການສຶກສາຊັ້ນສູງ ຢ່າງມີແຜນການ, ມີຈຸດສຸມບູລິມະສິດ ແລະໃຫ້ສອດ ຄ່ອງກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃນແຕ່ລະໄລຍະ. ໃນນັ້ນ, ລັດ ມີໜ້າທີ່ລົງທຶນໂດຍກົງເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງ, ອາຄານສະຖານທີ່, ວັດຖຸອຸປະກອນເຕັກນິກ,

ພາຫະນະ, ສື່ການຮຽນ-ການສອນ, ສິ່ງອໍານວຍຄວາມສະດວກຕ່າງໆ ແລະການກໍ່ສ້າງ, ບໍາລຸງ, ພັດທະນາຄູ ແລະບຸກຄະລາກອນ ຂອງສະຖາບັນການສຶກສາຊັ້ນສູງ ຕາມຮູບແບບ ແລະປະເພດ ທີ່ເຫັນວ່າມີຄວາມຈໍາເປັນ.

**ມາດຕາ 42 ການລົງທຶນຂອງພາກເອກະຊົນ**

ການລົງທຶນຂອງພາກເອກະຊົນ ແມ່ນການລົງທຶນໂດຍກົງຂອງບຸກຄົນ, ນິຕິບຸກຄົນ ແລະ ພາກທຸລະກິດເອກະຊົນ ພາຍໃນ ຫຼືຕ່າງປະເທດ ເພື່ອສ້າງຕັ້ງສະຖາບັນການສຶກສາຊັ້ນສູງ ໂດຍປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະລະບຽບການອື່ນ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະປະຕິບັດຕາມນະໂຍບາຍສົ່ງເສີມການສຶກສາຂອງລັດຖະບານ ໃນແຕ່ລະໄລຍະ.

**ມາດຕາ 43 ການລົງທຶນຮ່ວມ**

ລັດສົ່ງເສີມໃຫ້ມີການລົງທຶນຮ່ວມ ລະຫວ່າງພາກລັດ ແລະພາກເອກະຊົນ, ຊຸມຊົນ ແລະບຸກຄົນ ຫຼືລວມໝູ່ ທັງພາຍໃນ ແລະຕ່າງປະເທດ ເຂົ້າໃນການພັດທະນາການສຶກສາຊັ້ນສູງ ເຊັ່ນ ການພັດທະນາພື້ນຖານໂຄງລ່າງ, ວັດຖຸປະກອນເຕັກນິກ ແລະເຕັກໂນໂລຊີ, ການພັດທະນາບຸກຄະລາກອນ, ການບໍລິການວິຊາການ ແລະການຄົ້ນຄວ້າວິທະຍາສາດ ໂດຍສອດຄ່ອງກັບນະໂຍບາຍ ແລະກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 9
## ການເງິນ ແລະຊັບສິນ ຂອງສະຖາບັນການສຶກສາຊັ້ນສູງ

**ມາດຕາ 44 ແຫຼ່ງລາຍຮັບ**

1. ສະຖາບັນການສຶກສາຊັ້ນສູງ ຂອງລັດ ມີແຫຼ່ງລາຍຮັບຕົ້ນຕໍ ດັ່ງນີ້:
   (1) ງົບປະມານຂອງລັດ: ຕາມແຜນແບ່ງປັນງົບປະມານໃນແຕ່ລະປີ, ທຶນຊ່ວຍເຫຼືອລ້າ; ທຶນກູ້ຢືມພາຍໃນ ຫຼືຕ່າງປະເທດ;
   (2) ຄ່າຮຽນ, ຄ່າລົງທະບຽນ ແລະຄ່າທໍານຽມ ປະກາສະນີຍະບັດ ຂອງນັກສຶກສາ;
   (3) ຄ່າບໍລິການວິຊາການ: ການຄົ້ນຄວ້າວິທະຍາສາດ, ການໃຫ້ຄໍາປຶກສາ, ການຈັດການຝຶກອົບຮົມ, ການທົດລອງ-ທົດສອບ, ການຜະລິດ, ການພັດທະນາ ແລະການນໍາໃຊ້ເຕັກໂນໂລຊີ, ຄ່າເຊົ່າສະຖານທີ່ ແລະອື່ນໆ ຕາມກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ.
   (4) ການບໍລິຈາກຂອງ ບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼືການຈັດຕັ້ງຕ່າງໆ ຢູ່ພາຍໃນ ຫຼືຕ່າງປະເທດ.
2. ສະຖາບັນການສຶກສາຊັ້ນສູງຂອງພາກເອກະຊົນ ມີແຫຼ່ງລາຍຮັບຕົ້ນຕໍ ດັ່ງນີ້:
   (1) ຊັບສິນ, ທຶນຮອນ ຫຼືທຶນກູ້ຢືມ ຂອງຜູ້ປະກອບກິດຈະການ;
   (2) ຄ່າຮຽນ, ຄ່າລົງທະບຽນ, ຄ່າທໍານຽມປະກາສະນີຍະບັດຂອງນັກສຶກສາ;

(3) ຄ່າບໍລິການວິຊາການ: ການຄົ້ນຄວ້າວິທະຍາສາດ, ການໃຫ້ຄໍາປຶກສາ, ການຈັດການຝຶກອົບຮົມ, ການທົດລອງ-ທົດສອບ, ການຜະລິດ, ການພັດທະນາ ແລະການນໍາໃຊ້ເຕັກໂນໂລຊີ, ຄ່າເຊົ່າສະຖານທີ່ ແລະອື່ນໆ ຕາມກົດໝາຍ ແລະລະບຽບການ;

(4) ທຶນສົມທົບ ຈາກແຫຼ່ງອື່ນໆ ທີ່ຖືກຕ້ອງຕາມກົດໝາຍ.

### ມາດຕາ 45 ຖານະທາງການເງິນຂອງສະຖາບັນການສຶກສາຊັ້ນສູງ

ສະຖາບັນການສຶກສາຊັ້ນສູງຂອງລັດ ສະເພາະປະເພດ 1 ແລະ ປະເພດ 2 ມີຖານະການເງິນເປັນຫົວໜ່ວຍງົບປະມານຂັ້ນ 1 ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ສ່ວນສະຖາບັນການສຶກສາຊັ້ນສູງປະເພດອື່ນ ແມ່ນອີງຕາມການແບ່ງຂັ້ນຄຸ້ມຄອງ ຂອງການຈັດຕັ້ງ ຂັ້ນສູນກາງ ແລະທ້ອງຖິ່ນ.

### ມາດຕາ 46 ການຄຸ້ມຄອງການເງິນ ແລະຊັບສິນ

ການຄຸ້ມຄອງການເງິນ ແລະຊັບສິນ ຂອງສະຖາບັນການສຶກສາຊັ້ນສູງຂອງ ລັດທຸກປະເພດ ໃຫ້ປະຕິບັດຕາມກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 47 ການກວດກາ ແລະ ກວດສອບ

ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ ແລະທຸກປະເພດ ຕ້ອງໄດ້ຮັບການກວດກາ ແລະກວດສອບປະຈໍາປີ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍວ່າດ້ວຍການກວດສອບແຫ່ງລັດ, ກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 10
## ການຮ່ວມມືພາຍໃນ ແລະຕ່າງປະເທດ

### ມາດຕາ 48 ການຮ່ວມມືພາຍໃນ

ສະຖາບັນການສຶກສາຊັ້ນສູງທຸກປະເພດ ມີສິດພົວພັນຮ່ວມມື ທາງດ້ານວິຊາການ ກັບສະຖາບັນການສຶກສາ, ການຈັດຕັ້ງພາກລັດ, ພາກເອກະຊົນ, ພາກທຸລະກິດ ແລະຫົວໜ່ວຍການຜະລິດ ຕາມທີ່ໄດ້ກໍານົດໄວ້ໃນພາລະບົດບາດຂອງສະຖາບັນ ແລະຖືກຕ້ອງຕາມກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 49 ການຮ່ວມມືກັບຕ່າງປະເທດ ແລະອົງການຈັດຕັ້ງສາກົນ

ສະຖາບັນການສຶກສາຊັ້ນສູງມີສິດພົວພັນຮ່ວມມື ທາງວິຊາການ ກັບສະຖາບັນການສຶກສາຂອງຕ່າງປະເທດ ແລະການຈັດຕັ້ງສາກົນ ໂດຍສອດຄ່ອງກັບນະໂຍບາຍ, ຖືກຕ້ອງຕາມກົດໝາຍ ແລະລະບຽບການ ຕາມການອະນຸຍາດຂອງລັດຖະບານ ຫຼືການຈັດຕັ້ງທີ່ກ່ຽວຂ້ອງ.

# ໝວດທີ 11
# ການຈັດຕັ້ງ ແລະການຄຸ້ມຄອງການສຶກສາຊັ້ນສູງ

**ມາດຕາ 50 ການຄຸ້ມຄອງຂອງລັດຕໍ່ການພັດທະນາການສຶກສາຊັ້ນສູງ**

1. ລັດຖະບານ:

(1) ກຳນົດຍຸດທະສາດ ແລະນະໂຍບາຍ ພັດທະນາການສຶກສາຊັ້ນສູງ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃນແຕ່ລະໄລຍະ; ຮັບປະກັນຄວາມຕໍ່ເນື່ອງ ແລະຄວາມຍືນຍົງ ເພື່ອສາມາດຕອບສະໜອງການກໍ່ສ້າງນັກວິຊາສະເພາະ-ນັກວິຊາການ ລະດັບສູງ ຮັບໃຊ້ໃຫ້ການພັດທະນາທຸກຂົງເຂດ: ເສດຖະກິດ, ວັດທະນະທຳ-ສັງຄົມ, ການເມືອງ-ການປົກຄອງ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວິທະຍາສາດ-ເຕັກໂນໂລຊີ ແລະອື່ນໆ ຢ່າງຄົບຊຸດ;

(2) ລົງທຶນ ກໍ່ສ້າງພື້ນຖານໂຄງລ່າງ ແລະພັດທະນາບຸກຄະລາກອນ ຂອງສະຖາບັນການສຶກສາຊັ້ນສູງ ຢ່າງມີຈຸດສຸມ, ຂົງເຂດວິຊາການທີ່ເປັນບູລິມະສິດ; ສ້າງເງື່ອນໄຂໃຫ້ການພັດທະນາການສຶກສາຊັ້ນສູງ ມີຄຸນນະພາບ ແລະມີປະສິດທິຜົນສູງ; ສາມາດເຊື່ອມໂຍງກັບພາກພື້ນ ແລະສາກົນ.

(3) ສົ່ງເສີມໃຫ້ພາກເອກະຊົນ ແລະການຈັດຕັ້ງ ທັງພາຍໃນ ແລະຕ່າງປະເທດ ທີ່ບໍ່ຫວັງຜົນກຳໄລ ລົງທຶນພັດທະນາການສຶກສາຊັ້ນສູງ ສຳລັບຂົງເຂດບູລິມະສິດ ທີ່ສອດຄ່ອງກັບນະໂຍບາຍ ແລະຖືກຕ້ອງຕາມກົດໝາຍ ແລະລະບຽບການ.

(4) ປະຕິບັດນະໂຍບາຍຍ້ອງຍໍບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະການຈັດຕັ້ງທີ່ມີຜົນງານດີເດັ່ນໃນການປະກອບສ່ວນ ພັດທະນາການສຶກສາຊັ້ນສູງ ແລະປະຕິບັດມາດຕະການ ຕໍ່ຜູ້ກະທຳຜິດແນວທາງນະໂຍບາຍ, ລະເມີດກົດໝາຍຂອງລັດ ຢ່າງເຂັ້ມງວດ.

2. ກະຊວງສຶກສາທິການ ແລະກິລາ:

- ກະຊວງສຶກສາທິການ ແລະກິລາ ເປັນອົງການຄຸ້ມຄອງລັດຂັ້ນມະຫາພາກ ຕໍ່ການ ເຄື່ອນໄຫວວຽກງານຂອງສະຖາບັນການສຶກສາຊັ້ນສູງທຸກຮູບແບບ ແລະທຸກປະເພດ; ສ້າງເຄື່ອງມື, ກົນໄກ ແລະນິຕິກຳ ເພື່ອການຕິດຕາມ, ກວດກາ ແລະປະເມີນຜົນການປະຕິບັດນະໂຍບາຍ, ແຜນຍຸດທະສາດ ການພັດທະນາການສຶກສາຊັ້ນສູງ ຂອງລັດຖະບານ.
- ຄຸ້ມຄອງໂດຍກົງ, ຮອບດ້ານ ບັນດາສະຖາບັນການສຶກສາຊັ້ນສູງ ທີ່ຂຶ້ນກັບຂະແໜງການສຶກສາ ລວມທັງພາກເອກະຊົນ, ການຈັດຕັ້ງພາຍໃນ ແລະຕ່າງປະເທດ ຕາມພາລະບົດບາດ ແລະການມອບໝາຍຂອງລັດຖະບານ.
- ຄຸ້ມຄອງທາງດ້ານວິຊາການ ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ ແລະທຸກປະເພດທີ່ຢູ່ພາຍໃຕ້ການຄຸ້ມຄອງຕາມສາຍຕັ້ງ ຂອງກະຊວງ, ອົງການທຽບເທົ່າກະຊວງ ແລະອົງການປົກຄອງທ້ອງຖິ່ນ.

- ຈັດຕັ້ງກົນໄກຄຸ້ມຄອງ ສະຖາບັນການສຶກສາ ລະດັບວິທະຍາໄລ ທຸກຮູບແບບ ໂດຍອີງຕາມການປະຕິບັດຫຼັກສູດ ຄື: ສາຍການສຶກສາຊັ້ນສູງຄຸ້ມຄອງຫຼັກສູດອະນຸປະລິນຍາ ແລະສາຍອາຊີວະສຶກສາຄຸ້ມຄອງຫຼັກສູດວິຊາຊີບຊັ້ນສູງ.

3. ກະຊວງ, ອົງການທຽບເທົ່າກະຊວງ ແລະອົງການປົກຄອງທ້ອງຖິ່ນ ມີໜ້າທີ່ຄຸ້ມຄອງສະຖາບັນການສຶກສາຊັ້ນສູງທີ່ຂຶ້ນກັບຕົນ ໂດຍອີງຕາມພາລະບົດບາດໃນການແບ່ງຂັ້ນຄຸ້ມຄອງ ຂອງລັດຖະບານ ແລະການມອບໝາຍ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 51 ສະພາການສຶກສາຊັ້ນສູງແຫ່ງຊາດ**

1. ພາລະບົດບາດ ແລະໜ້າທີ່:

ສະພາການສຶກສາຊັ້ນສູງແຫ່ງຊາດເປັນອົງການຈັດຕັ້ງທີ່ບໍ່ປະຈໍາການ, ມີພາລະບົດບາດ ເປັນເສນາທິການ ໃນການໃຫ້ຄໍາປຶກສາແກ່ລັດຖະບານ ກ່ຽວກັບການເຄື່ອນໄຫວທາງວິຊາການຂອງ ສະຖາບັນການສຶກສາຊັ້ນສູງ; ມີໜ້າທີ່ພິຈາລະນາ, ຮັບຮອງ ແລະສະເໜີລັດຖະບານ ເພື່ອຕົກລົງວຽກງານສໍາຄັນຈໍານວນໜຶ່ງ ຂອງການສຶກສາຊັ້ນສູງ ດັ່ງນີ້:

(1) ການສ້າງຕັ້ງ, ຂະຫຍາຍ ແລະຍຸບເລີກ ສະຖາບັນການສຶກສາຊັ້ນສູງ ລະດັບຊາດ ແລະນານາຊາດ.

(2) ການແຕ່ງຕັ້ງຕໍາແໜ່ງວິຊາການຂອງຄູ ຂັ້ນສາດສະດາຈານ ແລະຮອງສາດສະດາຈານ;

(3) ການຮັບຮອງຫົວຂໍ້ຄົ້ນຄວ້າວິທະຍາສາດ ລະດັບຊາດ ຂອງສະຖາບັນການສຶກສາຊັ້ນສູງ.

2. ກົງຈັກການຈັດຕັ້ງ:

ສະພາການສຶກສາຊັ້ນສູງແຫ່ງຊາດ ມີກົງຈັກການຈັດຕັ້ງ ດັ່ງນີ້:

(1) ຄະນະປະທານ: ລວມມີ ປະທານ ແລະຮອງປະທານ;

(2) ຄະນະປະຈໍາ: ລວມມີ ປະທານ, ຮອງປະທານ ແລະ ກໍາມະການຈໍານວນໜຶ່ງ;

(3) ຄະນະກໍາມາທິການຝ່າຍຕ່າງໆ ຕາມຄວາມຈໍາເປັນ;

(4) ຫ້ອງການສະພາການສຶກສາຊັ້ນສູງແຫ່ງຊາດ (ກອງເລຂານຸການ) ເປັນຫົວໜ່ວຍການຈັດຕັ້ງໜຶ່ງ ມີຖານະທຽບເທົ່າກັບສູນ ຫຼືສະຖາບັນຂຶ້ນກັບກົມ, ມີທີ່ຕັ້ງຢູ່ກະຊວງສຶກສາທິການ ແລະກິລາ.

3. ໂຄງປະກອບບຸກຄະລາກອນ:

ສະພາການສຶກສາຊັ້ນສູງແຫ່ງຊາດ ລວມມີສະມາຊິກທັງໝົດບໍ່ເກີນ 21ທ່ານ, ລະອຽດດັ່ງນີ້:

- ປະທານ ແລະຮອງປະທານ 2 ທ່ານ;
- ຄະນະປະຈໍາ 7 ທ່ານ ( ລວມທັງ ປະທານ ແລະຮອງປະທານ );
- ກໍາມະການ ຈໍານວນ 14 ທ່ານ (ຄັດເລືອກມາຈາກ ສະຖາບັນການສຶກສາຊັ້ນສູງ ແລະຜູ້ຊົງຄຸນວຸດທິ);
- ຫ້ອງການສະພາການສຶກສາຊັ້ນສູງແຫ່ງຊາດ (ກອງເລຂານຸການ) ປະກອບມີ ຫົວໜ້າ, ຮອງ 1 ທ່ານ ແລະພະນັກງານວິຊາການຈໍານວນໜຶ່ງ ຕາມຄວາມເໝາະສົມ.

4. ການແຕ່ງຕັ້ງ ແລະການກໍານົດລະບຽບການ:

(1) ການແຕ່ງຕັ້ງ:

- ປະທານ, ຮອງປະທານ ແລະກຳມະການ ຂອງສະພາການສຶກສາຊັ້ນສູງແຫ່ງຊາດ ແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ;
- ຫົວໜ້າຫ້ອງການສະພາການສຶກສາຊັ້ນສູງແຫ່ງຊາດ (ເປັນຫົວໜ້າກອງເລຂານຸການ) ແມ່ນລັດຖະກອນ, ມີຕຳແໜ່ງບໍລິຫານທຽບເທົ່າຮອງຫົວໜ້າກົມ, ແຕ່ງຕັ້ງໂດຍລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ;
- ຮອງຫົວໜ້າຫ້ອງການສະພາການສຶກສາຊັ້ນສູງແຫ່ງຊາດ (ເປັນຮອງຫົວໜ້າກອງເລຂານຸການ) ແມ່ນລັດຖະກອນ, ມີຕຳແໜ່ງບໍລິຫານ ທຽບເທົ່າ ຫົວໜ້າພະແນກຂອງກົມ, ແຕ່ງຕັ້ງໂດຍລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ.
- ຄະນະກຳມາທິການຝ່າຍຕ່າງໆ ແຕ່ງຕັ້ງໂດຍ ປະທານສະພາການສຶກສາຊັ້ນສູງແຫ່ງຊາດ;

(2) ການກຳນົດລະບຽບການ: ປະທານສະພາ ກຳນົດລະບຽບການເຄື່ອນໄຫວ ຂອງສະພາການສຶກສາຊັ້ນສູງແຫ່ງຊາດ.

**ມາດຕາ 52 ກົງຈັກການຈັດຕັ້ງ ແລະບຸກຄະລາກອນ ຂອງສະຖາບັນການສຶກສາຊັ້ນສູງ**

1. ມະຫາວິທະຍາໄລ ແລະສະຖາບັນ ທຽບເທົ່າມະຫາວິທະຍາໄລ:

ກ. ກົງຈັກການຈັດຕັ້ງ ປະກອບມີ:

(1) ສະພາມະຫາວິທະຍາໄລ ຫຼືສະພາສະຖາບັນ;

(2) ສຳນັກງານອະທິການບໍດີ ຫຼືສຳນັກງານສະຖາບັນ ປະກອບມີ: ຫ້ອງການຈຳນວນໜຶ່ງມີຖານະທຽບເທົ່າກົມຕາມຄວາມເໝາະສົມ ສຳລັບກົງຈັກການຈັດຕັ້ງຂອງມະຫາວິທະຍາໄລ ຫຼືກົມຈຳນວນໜຶ່ງຕາມຄວາມເໝາະສົມ ສຳລັບກົງຈັກຂອງສະຖາບັນທຽບເທົ່າມະຫາວິທະຍາໄລ. ໃນນັ້ນ, ມີ ຫ້ອງການ, ພະແນກການ, ຂະແໜງການ ແລະໜ່ວຍງານ;

(3) ສະພາບໍລິຫານ ແລະສະພາວິຊາການ;

(4) ຄະນະວິຊາຕ່າງໆ ປະກອບມີ: ພາກວິຊາ, ພະແນກ, ໜ່ວຍງານ, ໜ່ວຍວິຊາ;

(5) ສະຖາບັນ, ວິທະຍາໄລ, ສູນ, ຫໍສະໝຸດກາງ, ໂຮງຮຽນ, ໂຮງໝໍ ແລະຫົວໜ່ວຍການຈັດຕັ້ງບໍລິການອື່ນໆ ທີ່ຂຶ້ນກັບມະຫາວິທະຍາໄລ ຫຼືສະຖາບັນ ໃຫ້ປະຕິບັດຕາມລະບຽບການ ຂອງກະຊວງສຶກສາທິການ ແລະກິລາ ຫຼືການຈັດຕັ້ງທີ່ກ່ຽວຂ້ອງ.

ຂ. ໂຄງປະກອບບຸກຄະລາກອນມີ:

(1) ປະທານ, ຮອງປະທານສະພາ ແລະກຳມະການ ຕາມຈຳນວນທີ່ເໝາະສົມ;

(2) ອະທິການບໍດີ ຫຼືຫົວໜ້າສະຖາບັນ ແລະຮອງອະທິການບໍດີ ຫຼືຮອງຫົວໜ້າສະຖາບັນ 4 ເຖິງ 5 ຕຳແໜ່ງ;

(3) ຄະນະບໍດີ ຫຼືຫົວໜ້າກົມ ແລະຮອງຄະນະບໍດີ ຫຼືຮອງຫົວໜ້າກົມບໍ່ເກີນ 3 ຕຳແໜ່ງ;

(4) ຫົວໜ້າຫ້ອງການ ແລະຮອງ ຈຳນວນໜຶ່ງຕາມຄວາມເໝາະສົມ;

(5) ຫົວໜ້າພາກວິຊາ ແລະຮອງ ຈຳນວນໜຶ່ງ ຕາມຄວາມເໝາະສົມ;

(6) ຫົວໜ້າພະແນກ ແລະຮອງຈຳນວນໜຶ່ງຕາມຄວາມເໝາະສົມ;

(7) ຫົວໜ້າຂະແໜງ;

(8) ຫົວໜ້າໜ່ວຍງານ, ຫົວໜ້າໜ່ວຍວິຊາ;

(9) ອຳນວຍການ ແລະຮອງ ຫຼືຫົວໜ້າ ແລະຮອງສະຖາບັນ, ວິທະຍາໄລ, ສູນ, ຫໍສະໝຸດກາງ, ໂຮງຮຽນ, ໂຮງໝໍ ແລະຫົວໜ່ວຍການຈັດຕັ້ງອື່ນໆ.

ຄ. ການແຕ່ງຕັ້ງ:

(1) ນາຍົກລັດຖະມົນຕີ ແຕ່ງຕັ້ງອະທິການບໍດີ ຫຼືຫົວໜ້າສະຖາບັນ, ຮອງອະທິການບໍດີ ຫຼືຮອງຫົວໜ້າສະຖາບັນ ແລະຄະນະບໍດີ/ຫົວໜ້າກົມ ແລະ ຕຳແໜ່ງອື່ນທຽບເທົ່າ ຕາມການສະເໜີຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;

(2) ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ຫຼືກະຊວງ ຫຼືອົງການທຽບເທົ່າກະຊວງທີ່ກ່ຽວຂ້ອງ ແຕ່ງຕັ້ງ: ສະພາມະຫາວິທະຍາໄລ ຫຼືສະພາສະຖາບັນການສຶກສາຊັ້ນສູງ; ຕຳແໜ່ງບໍລິຫານປະເພດ ຮອງຄະນະບໍດີ/ຮອງຫົວໜ້າກົມ; ຫົວໜ້າພາກວິຊາ ຫຼືຫົວໜ້າຫ້ອງການ ແລະຕຳແໜ່ງບໍລິຫານທຽບເທົ່າອື່ນ ຕາມການສະເໜີຂອງອະທິການບໍດີ ຫຼືຫົວໜ້າສະຖາບັນທີ່ກ່ຽວຂ້ອງ;

(3) ອະທິການບໍດີ ຫຼືຫົວໜ້າສະຖາບັນແຕ່ງຕັ້ງ: ຕຳແໜ່ງບໍລິຫານປະເພດ ຮອງຫົວໜ້າຫ້ອງການ ແລະທຽບເທົ່າ, ຫົວໜ້າພະແນກ ແລະຮອງຫົວໜ້າພະແນກ, ຮອງຫົວໜ້າພາກວິຊາ, ຫົວໜ້າໜ່ວຍງານ, ຫົວໜ້າໜ່ວຍວິຊາ ແລະຫົວໜ່ວຍການຈັດຕັ້ງທຽບເທົ່າອື່ນ ທີ່ຢູ່ໃນການຈັດຕັ້ງ ແລະການຄຸ້ມຄອງຂອງມະຫາວິທະຍາໄລ ຫຼື ສະຖາບັນນັ້ນ.

2. ວິທະຍາໄລ, ວິທະຍາຄານ, ສະຖາບັນທຽບເທົ່າວິທະຍາໄລ:

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ, ກະຊວງ, ອົງການທຽບເທົ່າກະຊວງ ແລະອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ກຳນົດກົງຈັກການຈັດຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະການແຕ່ງຕັ້ງຕຳແໜ່ງງານບໍລິຫານ ຂອງສະຖາບັນການສຶກສາຊັ້ນສູງ ທີ່ມີຖານະວິທະຍາໄລ, ວິທະຍາຄານ, ສະຖາບັນທຽບເທົ່າວິທະຍາໄລທຸກຮູບແບບ ແລະທຸກປະເພດ ທີ່ກຳນົດໄວ້ໃນມາດຕາ 11 ແລະ ມາດຕາ 12 ຂອງດຳລັດສະບັບນີ້ ໂດຍອີງຕາມພາລະບົດ, ສິດ, ໜ້າທີ່ ແລະຄວາມຮັບຜິດຊອບ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ແລະກົດໝາຍວ່າດ້ວຍອົງການປົກຄອງທ້ອງຖິ່ນ.

**ມາດຕາ 53 ສິດເປັນເຈົ້າຕົນເອງຂອງສະຖາບັນການສຶກສາຊັ້ນສູງ**

ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ ແລະທຸກປະເພດ ຈະໄດ້ຮັບສິດເປັນເຈົ້າຕົນເອງ ໂດຍມີຫຼັກການ ແລະເງື່ອນໄຂ ດັ່ງນີ້:

1. ຫຼັກການ: ໄດ້ຮັບການຕົກລົງຈາກລັດຖະບານ ຫຼືການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ, ໂດຍສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ.

2. ເງື່ອນໄຂ: (1) ຕ້ອງເປັນສະຖາບັນການສຶກສາຊັ້ນສູງທີ່ມີຖານະມະຫາວິທະຍາໄລ ຫຼືທຽບເທົ່າ ແລະມີຄວາມໂດດເດັ່ນເປັນເລີດທາງວິຊາການ; (2) ມີຄວາມພ້ອມດ້ານການບໍລິຫານ-ຄຸ້ມຄອງ; ແລະ (3) ມີການຢັ້ງຢືນການຈັດລຳດັບການປະກັນຄຸນນະພາບ.

ມອບໃຫ້ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ກຳນົດມາດຕະຖານ, ເງື່ອນໄຂ ແລະລະບຽບການລະອຽດ ກ່ຽວກັບສິດເປັນເຈົ້າຕົນເອງ ຂອງສະຖາບັນການສຶກສາຊັ້ນສູງ.

## ໝວດທີ 12
## ຂໍ້ຫ້າມ

### ມາດຕາ 54 ຂໍ້ຫ້າມສຳລັບຄູ ແລະບຸກຄະລາກອນ

ຂໍ້ຫ້າມສຳລັບຄູ ແລະບຸກຄະລາກອນ ຂອງສະຖາບັນການສຶກສາຊັ້ນສູງ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສຶກສາ, ກົດໝາຍ ແລະລະບຽບການອື່ນທີ່ກ່ຽວຂ້ອງ.

### ມາດຕາ 55 ຂໍ້ຫ້າມສຳລັບນັກສຶກສາ

ນອກຈາກຂໍ້ຫ້າມ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາແລ້ວ, ນັກສຶກສາຕ້ອງປະຕິບັດຕາມກົດໝາຍ ແລະລະບຽບການອື່ນທີ່ກ່ຽວຂ້ອງ.

## ໝວດທີ 13
## ບົດບັນຍັດສຸດທ້າຍ

### ມາດຕາ 56 ການຈັດຕັ້ງປະຕິບັດ

ກະຊວງສຶກສາທິການ ແລະກິລາ, ກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ສະຖາບັນການສຶກສາຊັ້ນສູງທັງພາກລັດ, ເອກະຊົນ ແລະພາກສ່ວນກ່ຽວຂ້ອງອື່ນ ຈົ່ງຮັບຮູ້, ຜັນຂະຫຍາຍ ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 57 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ



ທອງສິງ ທຳມະວົງ